MINISTÈRE DE L'É[DUCATION]
BIBLIOTHÈQUE
CENTRE PÉDAGOGIQUE NATIONAL

# ຫນັງສື

# ນັນທຸປະກອນ

ຂອງ

## ສຳນັກງານວັນນະຄະດີ

ແກ້ໄຂໂດຍ ມະຫາສີລາ ວີຣະວົງ
ດ້ວຍຄວາມເຫັນຊອບຂອງຄນະກັມມະການວັນນະຄະດີ
ຈັດພິມອອກຈຳໜ່າຍດ້ວຍທຶນຂອງມູນນິທິອາຊີ
ພິມເທື່ອທີ່ນຶ່ງ ຈຳນວນ ໒໐໐໐ ສະບັບ
ວຽງຈັນ ວັນທີ່ ໒໐ ສິງຫາ ພ.ສ. ໒໕໐໓

# ມັນທຸປະກອນ

(ເຣື່ອງກົບກັບງູເປັນສ່ຽວກັນ)

## ຕົ້ນເຣື່ອງ

(໑) ກຸລບຸດຜູ້ມີພຍາ ຢ່ານິວຂີ້ຄ້ານຟັງ ຍັງຄັມພີມະຫາສາຕຣະ ອັນກ່າວເຖິງແບບຢ່າງ (ຂອງໂລກ) ທີ່ນັກປາດເຈົ້າໄດ້ເລືອກເອົາຈາກ ການປະພຶດຂອງສັດເດັຽຣະສານທັງຫລາຍມາສະແດງໄວ້ ໃຫ້ເປັນ ດັ່ງນ້ຳອະມະຕະ (ເຊິງນາງຕັນໄຕມະຫາເທວີ ໄດ້ນຳມາເລົ່າຖວາຍ ແກ່ພະຍາວິມະລະຈັກກະພັດດິຣາດ ດັ່ງຕໍ່ໄປນີ້)

ແຕ່ປາງກ່ອນ ມີປ່າໃຫຍ່ປ່າໜຶ່ງຢູ່ທາງທິດເໜືອຂອງນະຄອນ ອຸດເຊນີ, ຢູ່ແຄມປ່ານັ້ນມີບວກນ້ຳໃຫຍ່ບວກໜຶ່ງ ກົບຂຽດທັງຫລາຍ ອາສັຍຢູ່ໃນນ້ຳບວກນັ້ນ ກົບໃຫຍ່ໂຕໜຶ່ງຊື່ມະຫາທິປະຕິ ໄດ້ເປັນ ພຣະຍາປົກຄອງຝູງກົບຂຽດທັງຫລາຍ: ມະຫາທິປະຕິໄດ້ບອກໃຫ້ ບໍຣິວານຂອງຕົນ ພາກັນອັດປ່ອງຊ່ອງທາງບໍ່ໃຫ້ສັດຕູ (ຄືງູ) ລົງມາ ໃນບວກນັ້ນໄດ້ ດັ່ງນັ້ນພວກກົບຂຽດທັງຫລາຍຈຶ່ງຢູ່ສຸກສຳບາຍ ຕລອດມາເປັນເວລາເຫິງນານ.

ປາງນັ້ນມີງູເຫົ່າໜ້ໂຕໜຶ່ງ ອາສັຍຢູ່ໃນອຸທຍານຂອງພຣະຍາ ອຸດເຊນີ ມັນໄດ້ທ່ຽວຊອກກິນກົບຂຽດທີ່ຢູ່ໃນຍ່ານສວນນັ້ນໝົດແລ້ວ

ຈົນບໍ່ມີແນວຈະກິນ ຈຶງໄດ້ນອນອຶດອາຫານມາຫລາຍວັນ ງູຫິວຄວາມປາກຢູ່ບໍ່ໄດ້ ວັນນຶ່ງມັນຈຶງອອກຈາກສວນຊອກທ່ຽວຫາກິນໄປຈົນເຖິງປ່າທີ່ຢູ່ທາງທິດເໜືອຂອງເມືອງເລີຍ ໄປເຫັນກົບຂຽດທັງຫລາຍເຕັນຢູ່ໃນບວກນັ້ນ ງູດີໃຈຫລາຍຮ່ຳເພິງວ່າ "ເອີເຫີ! ກູມາພໍ້ໂຊກໃຫ່ຍແລ້ວ ແຕ່ນີ້ຕໍ່ໄປກູບໍ່ອຶດຕາຍລະ" ຄິດດັ່ງນີ້ແລ້ວ ຈຶງລີເລືອເຂົ້າໄປໃກ້ບວກ ແຕ່ພໍເຂົ້າໄປໃກ້ເລີຍບໍ່ເຫັນທາງລົງຈັກບ່ອນ ມັນຈຶງຮ່ຳເພິງໃນໃຈວ່າ "ບື! ຄິດວ່າໂຊກໃຫ່ຍແລ້ວ ເລີຍບໍ່ເປັນດັ່ງຄິດ, ມັນຄະນຶງຕໍ່ໄປອີກວ່າ "ເຮື່ອງນີ້ເຮົາຕ້ອງໃຊ້ຄວາມພຍາຍາມຊອກຫາອຸບາຍຕີປອງກິນພວກກົບນີ້ໃຫ້ໄດ້" ຄິດແລ້ວມັນຈຶງພິຕີເຮັດເໝືອນດັ່ງມີຄວາມເມື່ອຍລ້າອິດຫິວ ນອນແລດຢູ່ແຄມບວກນັ້ນທັນໃດນັ້ນພວກກົບທັງຫລາຍ ເຫັນງູມານອນຢູ່ແຄມບວກມີອາການດັ່ງນັ້ນ ຈຶງພາກັນໄປບອກພຣະຍາກົບ ພຣະຍາກົບມະຫາທິປະຕີໄດ້ຊາບວ່າມີງູມານອນຢູ່ໃກ້ບວກ ຈຶງສັ່ງບໍຣິວານທັງຫລາຍໄປຮັກສາຕັນປ່ອງຊ່ອງຮູໄວ້ໃຫ້ດີທຸກແຫ່ງ ແລ້ວສ່ວນຕົນຈຶງເຕັ້ນມາໃກ້ໆ ບ່ອນງູຢູ່ຮ້ອງຖາມອອກໄປວ່າ "ເຮີຍ! ງູ ເຈົ້ານີ້ມາແຕ່ໃສ? ມີວຽກການແນວໃດ ຈຶງມານອນແລດຢູ່ໜີ້?" ງູໄດ້ຍິນພຣະຍາກົບຖາມດັ່ງນັ້ນ ກໍກົ້ມຫົວລົງສະແດງຄວາມໂຄຣົບ ແລ້ວກ່າວວ່າ "ຂ້າແຕ່ທ່ານພຣະຍາກົບ ຂ້າເຈົ້າຂໍໄຫວ້ນົບໂຄຣົບທ່ານແຕ່ໄກ ຂໍທ່ານຈົ່ງໄດ້ເມດຕາຂ້າເຈົ້າດ້ວຍ ເພາະຂ້າເຈົ້ານີ້ເປັນຜູ້ອະນາຖາຫາທີ່ເພິ່ງບໍ່ມີ ຍ້ອນຖືກພຼານສາບແຊ່ງໃຫ້ອຶດນ້ຳແລະອາຫານຕາຍ" ພຣະຍາ

ກົບສົງສັຍຈຶ່ງຖາມວ່າ "ເຣື່ອງເປັນຈັ່ງໃດ" ງູເລົ່າເຣື່ອງສ່ວນໂຕໃຫ້ພຣະຍາກົບຟັງວ່າ "ຂ້າແຕ່ທ່ານພຣະຍາຈົ່ງຟັງເຣື່ອງຂອງຂ້າເຈົ້າວ່າ ຈະມີຄວາມທຸກພໍປານໃດ ຄື: ແຕ່ກ່ອນ ຂ້າເຈົ້າອາສັຍຢູ່ໃນອຸທຍານຫລວງຂອງພຣະຍາອຸຄເຊນ ວັນນຶ່ງຂ້າເຈົ້າໄດ້ຕອດບຸດຊາຍຂອງພຼາມຊື່ ເກົາທິນ ຕາຍ;

ພຼາມພໍ່ລູກສອງຄົນນັ້ນ ເປັນຄົນດີມີສິນບໍຣິສຸດ ເມື່ອພຼາມເກົາທິນເຫັນລູກຂອງຕົນຖືກຂ້າເຈົ້າຕອດຕາຍ ຈຶ່ງອອກປາກສາບແຊ່ງຂ້າພະເຈົ້າວ່າ ໃຫ້ຂ້າເຈົ້າຕາຍດ້ວຍການອົດປາກນ້ຳແລະອາຫານ ຫລືບໍ່ດັ່ງນັ້ນກໍ່ໃຫ້ໄດ້ເປັນບໍຣິວານຮັບໃຊ້ພວກກົບ ດ້ວຍອຳນາດຄວາມສາບແຊ່ງຂອງພຼາມຜູ້ມີສີລ ຂ້າເຈົ້າຈຶ່ງໄດ້ປະສົບພັຍຢ່າງນະຫັນ ດັ່ງທີ່ທ່ານເຫັນຢູ່ນີ້ ຄືໃນເຂດແດນທີ່ຂ້າເຈົ້າອາສັຍຢູ່ ເກີດນ້ຳໃນບວກໜອງແຄນນັ້ນແຫ້ງຂອດໝົດ ຍາດພີ່ນ້ອງຂອງຂ້າເຈົ້າຕາຍໝົດ ສ່ວນຂ້າເຈົ້າກໍອົດນ້ຳແລະອາຫານມາຕັ້ງເດືອນ ເຫລືອຕາຍຈຶ່ງໄດ້ລີ້ເລັຍມາເຖິງນີ້ ສະນັ້ນຂໍທ່ານຈົ່ງໄດ້ເມດຕາ ໂຜດໃຫ້ ຂ້າເຈົ້າ ໄດ້ລົງໄປ ກິນນ້ຳ ໃນບວກ ຂອງທ່ານ ດ້ວຍເຖີດ ປະການນຶ່ງຖ້າຂ້າເຈົ້າຍັງບໍ່ຕາຍກໍຈະໄດ້ເປັນບໍຣິວານຮັບໃຊ້ພວກທ່ານຕາມຄຳສາບຂອງພຼາມ ພຣະຍາກົບໄດ້ຟັງດັ່ງນັ້ນ ຈຶ່ງຕອບໄປວ່າທັມມະດາງູ ຍ່ອມເປັນສັດຕູຕໍ່ກົບຂຽດມາແຕ່ໃດ ດັ່ງນັ້ນເຮົາຈຶ່ງບໍ່ຫາວອະນຸຍາດໃຫ້ທ່ານລົງມາໃນທີ່ຢູ່ຂອງເຮົາໄດ້ ປະການນຶ່ງພີ່ນ້ອງບໍຣິວານພົງພັນຂອງເຮົາກໍມີຫລາຍ ເຖິງຈັ່ງໃດເຮົາກໍຕ້ອງປຶກສາ

# ໖. ເຣື່ອງແຮ້ງກັບແມວ

ທີ່ໃກ້ຝັ່ງແມ່ນ້ຳພາກີຣະຖີ ມີຕົ້ນໄຮໃຫຍ່ຕົ້ນນຶ່ງ ບ່ອນງ່າພາກເປັນໂກນ ແຮ້ງເຖົ້າໂຕນຶ່ງຕາບໍ່ຮຸ່ງປານໃດອາສັຍຢູ່ໃນໂກນນັ້ນ ຝູງນົກທັງຫລາຍທີ່ມາເຮັດຮັງຢູ່ເທິງຕົ້ນໄມ້ນັ້ນ ມີຄວາມອີດູ ຈຶ່ງພາກັນແບ່ງອາຫານທີ່ຫາມາໄດ້ຕົວລະເລັກລະນ້ອຍ ໃຫ້ແຮ້ງເຖົ້າກິນພໍບໍ່ຕາຍ; ຢູ່ມາມື້ນຶ່ງ ມີແມວຕົວນຶ່ງ ຊື່ ເທັຽຣະຄະກັນ ມາທີ່ຕົ້ນໄມ້ນັ້ນ ໄດ້ຍິນສຽງລູກນົກຮ້ອງກໍຂຶ້ນໄປເພື່ອຈະກິນ ແຕ່ພໍຂຶ້ນໄປໃກ້ພວກລູກນົກຕົກໃຈກໍຮ້ອງແຊວຂຶ້ນ ແຮ້ງໄດ້ຍິນສຽງລູກນົກຮ້ອງແຊວຈຶ່ງຮ້ອງຂບາບຖາມອອກໄປວ່າ "ໃຜ ? ຂຶ້ນມາຫັ້ນຫີ ?" ແມວເຫັນແຮ້ງກໍຕົກໃຈຄິດວ່າ "ຕາຍລະກູ ທ່ານີ້ !" ແຕ່ຄິດຍັ້ງສະຕິໄດ້ວ່າ

ຕາບໃດທີ່ພັຍອັນຕາຍຍັງຢູ່ໄກ ກໍຄວນກົວພັຍອັນຕາຍຕາບນັ້ນ ແຕ່ວ່າເມື່ອກະເທີນແລ້ວກໍເພິງຈັດການໃຫ້ຄວນກັບ ບັດນີ້ເຮົາເຂົ້າໃກ້ອັນຕະຣາຍແລ້ວ ຈະໜີກໍຄົງຈະບໍ່ພົ້ນຕ້ອງເລີຍຕາມເລີຍຄິດແລ້ວ ຈຶ່ງທຳທ່າໝອບເຂົ້າໄປຫາແຮ້ງ ເວົ້າວ່າ "ຂ້າແຕ່ທ່ານຜູ້ປະເສີດ ຂ້າພະເຈົ້າຂໍສະແດງຄວາມໂຄຣົບຕໍ່ທ່ານ"

ແຮ້ງນາຍຊູ່ວ່າ "ໃຜຫື ?"

ແມວຕອບວ່າ "ຂ້າພະເຈົ້າ ເປັນແມວ"

ແຮ້ງນາຍວ່າ "ໂຫ ! ນົ້ກຜູ້ຮ້າຍໃຫຍ່ ພ້າວໜີເດີ້ງ ບໍ່ດັ່ງນັ້ນ ຕ້ອງຕາຍ"

ແມວໄຫ້ວວອນວ່າ "ກະຣຸນາອິດໃຈຟັງຄວາມເວົ້າຂອງຂ້າພະເຈົ້າກ່ອນ ເມື່ອທ່ານໄດ້ຟັງແລ້ວເຫັນດີວ່າ ຂ້າພະເຈົ້າສົມຄວນຕາຍ ຂ້າພະເຈົ້າກໍຍິນດີຮັບໂທດ ແຕ່ວ່າ ມີໃຜຢູ່ໃສແດ່ທີ່ຖືກໃສ່ໂທດຫລືໄດ້ຮັບກຽດຕິຍົດ ແຕ່ພຽງດ້ວຍຊາດສະກຸນເທົ່ານັ້ນ ມີແຕ່ເຂົາໃສ່ໂທດຫລືໃຫ້ກຽດ ໃນເມື່ອໄດ້ສືບສວນເບິ່ງຄວາມປະພຶດແລ້ວ"

ແຮ້ງສືບສວນວ່າ "ເຈົ້າຈົ່ງບອກມາ ວ່າເຈົ້າມີຄວາມປະພຶດຢ່າງໃດ"

ແມວໃຫ້ການວ່າ "ຂ້າພະເຈົ້າຢູ່ແຖວຝັ່ງແມ່ນ້ຳຄຸງຄາ ກະທຳພຽນໃນການລ້າງບາບ ເປັນນິດສະມິ ເວັ້ນບໍ່ຣິໂພກມັງສາຫານ ຖືພົມຈັນ ສະມາທານສິນເປັນນິດ ບັດນີ້ຂ້າພະເຈົ້າໄດ້ຍິນກິດຕິສັບຄຸນຄວາມດີຂອງທ່ານລືຊາໄປວ່າ ທ່ານມີຄວາມຮູ້ຫລາຍ ປະພຶດຢູ່ໃນສັມມາປະຕິບັດ ເພາະສະນັ້ນຂ້າພະເຈົ້າຈິ່ງມາຫາເພື່ອຮ່ຳຮຽນຂໍ້ຣະບຽບໃນສາສນາຈາກທ່ານ ເຊິ່ງເປັນອາວຸໂສແລະສລາດອາດຮູ້ໃນສິລປະວິທຍາທຸກຢ່າງ ເມື່ອເປັນດັ່ງນີ້ເຫດສັນໃດທ່ານຜູ້ທະຣົງທັມ ຈິ່ງຈະທຳຮ້າຍຂ້າພະເຈົ້າ"

ແຮ້ງສຽງອ່ອນລົງຕອບວ່າ "ຂຶ້ນຊື່ວ່າແມວແລ້ວ ຍ່ອມເປັນສັດທີ່ມັກກິນຊີ້ນປາເປັນອາຫານ; ແລະກໍຢູ່ເທິງຕົ້ນໄມ້ນີ້ ມີລູກນົກຢູ່ຫລາຍໂຕ ເຮົາຈິ່ງໄດ້ເວົ້າຂັດໄວ້"

ແມວໄດ້ຟັງກໍໝອບຫົວລົງແລ້ວກ່າວວ່າ "ສ່ວນຂ້າພະເຈົ້າຜິດຈາກແມວສາມັນ ຍ້ອນໄດ້ສະມາທານສິນ ມີຄວາມພຽນແກ່ກ້າ

ດັ່ງນີ້ ຮຸ່ງເຊົ້າມາສາມສັດນັ້ນກໍໄປຊອກຫາກິນ ໃນຖິນທີຕົນພໍໃຈ, ຢູ່ມາມື້ນຶ່ງໝາຈອກເວົ້ານຳກວາງເປັນຄວາມລັບວ່າ "ສ່ຽວເອີຍ ! ບ່ອນນຶ່ງໃນປ່ານີ້ມີໄຮ່ເຂົ້າຂຽວງາມຢູ່ ຂ້າເຈົ້າຈະພາໄປເບິ່ງ" ເມື່ອໝາຈອກໄດ້ຈັດການໃຫ້ເປັນໄປດັ່ງນັ້ນແລ້ວ, ກວາງກໍເຂົ້າໄປກິນເຂົ້າໃນໄຮ່ນັ້ນທຸກວັນ; ຕໍ່ມາສອງສາມມື້ເຈົ້າຂອງໄຮ່ມາເຫັນຮອຍກວາງກິນເຂົ້າ ຈຶ່ງຈັດການຫ້າງແຮ້ວດັກໄວ້ ໃນຄືນນັ້ນກວາງເຂົ້າມາກິນເຂົ້າໄຮ່ຕາມເຄີຍ ກໍເລີຍຖືກແຮ້ວ ດີ້ນທໍ່ໃດບໍ່ຫລຸດ ຈຶ່ງເຊົາຄຶດຮ່ຳເພິງວ່າ "ຜູ້ສາມາດພໍຈະໃຫ້ເຮົາພົ້ນຈາກຄວາມຕາຍນີ້ໄດ້ບໍ່ເຫັນໃຜນອກຈາກມິດສະຫາຍ" ກຳລັງຄຶດກັງວົນຢູ່ດັ່ງນີ້ ໝາຈອກກໍມາເຫັນ ໝາຈອກຄຶດດີໃຈວ່າ "ກົນອຸບາຍຂອງເຮົາສຳເຣັດແລ້ວຄວາມປາຖນາຂອງເຮົາຈະໄດ້ຜົນບໍຣິບູນ ບໍ່ສົງສັຍ ເພາະວ່າ ເມື່ອເຈົ້າຂອງໄຮ່ປາດກວາງ ເຮົາກໍຈະໄດ້ກິນກະດູກທີ່ມີຊີ້ນແລະເລືອດຕົກຢູ່ເປັນແນ່ນອນ" ຝ່າຍກວາງເຫລືອບເຫັນໝາຈອກກໍດີໃຈ ຮ້ອງໃຫ້ມາຊ່ວຍວ່າ "ສ່ຽວເອີຍ ! ມາຊ່ວຍກັດເຊືອກແຮ້ວນີ້ໃຫ້ຂ້າພະເຈົ້າຫລຸດໄປໄວໆ ດ້ວຍ"

ເພາະວ່າ:

ໃນເມື່ອໄດ້ຮັບຄວາມວິບັດ ຈຶ່ງຈະເຫັນໃຈສ່ຽວ
ໃນເວລາເສິກມາກ່ຽວ ຈຶ່ງຈະເຫັນໃຈທະຫານ
ໃນເວລາໃຫ້ກູ້ສິງຄານ ຈຶ່ງຈະເຫັນໃຈຜູ້ມີສະອາດ
ໃນຍາມສິນບັດວິບາດ ຈຶ່ງຈະເຫັນໃຈພະຣິຍາ

ໃນຄາວອະນາຖາ      ຈິງຈະເຫັນໃຈພີ່ນ້ອງ

"ຜູ້ໃດບໍ່ລະຖິ້ມເພື່ອນ ໃນຄາວຊື່ນມ່ວນ ກັບໃນຄາວໄດ້ຮັບຄວາມທຸກຮ້ອນ ໃນຄາວອຶດອາຫານ ໃນຄາວເກີດວຸ່ນວາຍຈະລາຈົນ ນຳໄປເຖິງຜັກຕູພຣະຣາຊວັງແລະປ່າຊ້າ ຜູ້ນັ້ນນັບວ່າເປັນມິດແທ້."

ໝາຈອກພິຈາຣະນາເບິ່ງແຮ້ວ ເຫັນວ່າ ຮັດແໜ້ນດີແລ້ວ ຈິ່ງເວົ້າວ່າ "ສ່ຽວເອີຍ ! ສາຍແຮ້ວນີ້ເຮັດດ້ວຍເອັນສັດ ວັນນີ້ກໍເປັນວັນສິນ ຈະໃຫ້ຂ້າພະເຈົ້າເອົາແຂ້ວໄປຊຸບສາຍເອັນນັ້ນໄດ້ຈັ່ງໃດ ? ຄອຍຖ້າໃຫ້ເຖິງມື້ເຊົ້າເປັນມື້ໃໝ່ກ່ອນເຖີດ ! ຂ້າພະເຈົ້າຈະຈັດການໃຫ້ເອງ" ເວົ້າແລ້ວກໍໜີໄປນອນຢູ່ໃນພຸ່ມໄມ້ພຸ່ມນຶ່ງໃກ້ ໆ ຫັ້ນ

ກ່າວເຖິງກາ ເວລາແລງບໍ່ເຫັນກວາງກໍຫ່ວງນຳຫາ ໄປພໍ້ກວາງຕິດຢູ່ໃນສະພາບດັ່ງກ່າວແລ້ວ ຈິ່ງເຂົ້າໄປຖາມວ່າ "ໂຫ ! ສ່ຽວ ! ນີ້ເປັນຈັ່ງໃດກັນ ?"

ກວາງຕອບວ່າ "ຜົນທີ່ບໍ່ເຊື່ອຟັງຄວາມສະຫາຍລະບໍ້ !"

ເພິ່ນຍັງວ່າ

"ຜູ້ໃດບໍ່ຟັງຄຳເຕືອນຂອງມິດຜູ້ຫວັງດີ ຄວາມວິບັດກໍເຂົ້າໃກ້ຜູ້ນັ້ນ ເຂົາຈັກເປັນທີ່ດີໃຈຂອງສັດຕູ

ກາຖາມວ່າ "ນີ້ອ້າຍໝາຈອກໄປໃສແລ້ວ ?"

ກວາງ "ນອນຢູ່ພຸ່ມໄມ້ໜັ້ນເນັ ! ຕັ້ງທ່າຄອຍກິນຊີ້ນຂອງຂ້າເຈົ້າຢູ່"

ກົບທັງຫລາຍຖາມ ເຣື່ອງເປັນຢ່າງໃດ

ກົບໂພທະຣະ ເລົ່ານິຍາຍ

## ໓. ເຣື່ອງພຣະຍາລີງ

ທີ່ສວນອຸດທະຍານຊື່ຈັນທາວັນ ຂອງພຣະຍາພິຕິສານິຣາດ ແຫ່ງເມືອງພາຄະປຸຣະ ມີຝູງລີງອາສັຍຢູ່ເປັນອັນມາກ ລີງໃຫຍ່ໂຕນຶ່ງຊື່ ປຸລະວາ ເປັນນາຍຂອງພວກລີງທັງຫລາຍ ວັນນຶ່ງພຣະຍາລີງປຸລະວາ ເຂົ້າໄປໃນເມືອງ ໄດ້ເຫັນສາວໃຊ້ນາງເທວີຄົນນຶ່ງຍ່າງມາທາງໂຮງນ້ຳຂອງພຣະຍາ ແລະຄືກ ແພະໂຕນຶ່ງທີ່ມາກິນຫຍ້າຢູ່ໂຮງນ້ຳນັ້ນໄລ່ຊົນເອົາ ພຣະຍາລີງເຫັນເຫດນັ້ນແລ້ວ ນາຮ່ຳເພິງວ່າ "ກິຍາອັນແພະທີ່ກະທຳຮ້າຍແກ່ນາງທາສີໃນຄາວນີ້ອາດຈັກເກີດອຸປັດທະວະອັນຕາຍ ແກ່ລີງທັງຫລາຍເປັນແນ່ແທ້" ຮ່ຳເພິງ ແລ້ວ ກໍກັບຄືນມາ ເລົ່າອາການ ທີ່ຕົນ ໄດ້ເຫັນ ແລ້ວ ເຕືອນລີງທັງຫລາຍວ່າ "ດູລາເພື່ອນພີ່ນ້ອງທັງຫລາຍ ພວກເຮົາທັງຫລາຍບໍ່ຄວນຢູ່ໃນທີ່ນີ້ ຖ້າເຮົາຢູ່ພັຍອັນຕາຍຈະມາເຖິງພວກເຮົາໃນບໍ່ຊ້ານາພວກເຮົາຄວນຍ້າຍໄປຫາບ່ອນຢູ່ໃໝ່"

ລີງທັງຫລາຍໄດ້ຍິນພຣະຍາລີງເວົ້າດັ່ງນັ້ນ ກໍພາກັນຫົວຂວັນວ່າ "ສາວໃຊ້ພຣະຍາກັບແພະຜິດກັນເຫດສັນໃດ ຈິ່ງຈະມາເປັນພັຍແກ່ພວກເຮົາ ປະຫລາດແທ້ ! ຄຳນີ້ເຮົາບໍ່ເພິງເຊື່ອ" ວ່າແລ້ວ

ກໍພາກັນຢູ່ໃນສວນນັ້ນຕໍ່ມາ  ສ່ວນພຣະຍາລີງຜູ້ຮູ້ເຫດການໄກ  ໄດ້ພາເອົາລູກເມັຽຂອງຕົນໜີໄປຢູ່ປ່າອື່ນ;

ຕໍ່ມາມື້ນຶ່ງ  ນາງທາສີຄົນນັ້ນຕາກເຂົ້າໄວ້  ແພະໂຕນັ້ນມາກິນ  ນາງທາສີຄຽດເປັນໄຟຈັບເອົາທ່ອນຫຍ້າແຫ້ງໄດ້  ຈຸ່ມລົງໃນນ້ຳມັນເອົາໄຟຈຸດແລ້ວຖີ້ມປົກຫລັງແພະ ໆ ຮ້ອນກໍແລ່ນເຂົ້າໂຮງມ້ານອນເກືອກລົງບ່ອນຫຍ້າແຫ້ງ  ເພື່ອໃຫ້ໄຟມອດ  ໄຟເລີຍໄໝ້ຫຍ້າແຫ້ງແລ້ວລາມໄໝ້ໂຮງມ້າຫລວງໝົດ  ມ້າພຣະຍາຕາຍລົງເປັນອັນມາກ  ທີ່ເຫລືອຕາຍກໍເຈັບປ່ວຍເປັນບາດແຜເປື່ອຍເນົ່າ  ເພາະຖືກໄຟລວກ; ພຣະຣາຊາບີຕີສານີຣາດ  ຈຶ່ງຕັດສັ່ງໃຫ້ໝໍຍາມ້າມາທຳການຮັກສາ  ໝໍຍາມ້າທູນວ່າ  "ມ້າຖືກໄຟລວກດັ່ງນີ້ຕ້ອງຫານ້ຳມັນລີງມາທາໃສ່" ຈຶ່ງຈະຫາຽ  ແລະດ້ວຍເຫດນີ້ພຣະຍາບີຕີສານີຣາດ ຈຶ່ງສັ່ງໃຫ້ພວກນາຍພານຈັດການຍິງເອົາລີງໃນສວນນັ້ນຈົນໝົດ  ເພາະສະນັ້ນ  ນັກປາດຜູ້ສລາດໃນຄອງທັມຈຶ່ງກ່າວເປັນພາສິດສອນໄວ້ວ່າ

(໖) "ລີງທັງຫລາຍເຖິງຄວາມພິນາດສິບຫາຍ  ຍ້ອນຄວາມຜິດຖຽງກັນຂອງນາງສາວໃຊ້ແລະແພະ  ເພາະສະນັ້ນຜູ້ມີປັນຍາ  ຈຶ່ງຄວນເວັ້ນກາຍວິວາດຕິດຖຽງກັນຂອງຄົນທັງຫລາຍໃຫ້ໄກ."

ກົນໂພທະຣະເວົ້າຕໍ່ໄປອີກວ່າ  "ການທີ່ພວກເຮົາຈະຂອດມິດກັບໆ ຜູ້ເປັນສັດຕູເກົ່າແກ່ນັ້ນ  ເປັນການເຮັດໃນສິ່ງທີ່ບໍ່ຄວນເຮັດ  ເພາະບູຮານເພິ່ນວ່າ"

"ຜູ້ໃດແລະມາເຮັດໃນສິ່ງທີ່ບໍ່ຄວນເຮັດ ຜູ້ນັ້ນຕ້ອງສິບຫາຍດັ່ງດຽວກັບວິທຍາທອນຕົນນີ້

ກົບທັງຫລາຍຖາມວ່າ ເຣື່ອງເປັນຢ່າງໃດ ?

ກົບໃພທະອະ ເລົ່າເຣື່ອງອີກ

## ໔. ເຣື່ອງວິທຍາທອນ

ແຕ່ປາງກ່ອນ ມີວິທຍາທອນຕົນນຶ່ງ ເມັຽຂອງມັນທົ່ງຄັບມາໄດ້ ໕ ເດືອນແລ້ວແຕ່ບໍ່ທັນເຖິງກຳໜົດອອກ ວັນນຶ່ງ ພວກນາງວິທຍາທະຣີ ທັງຫລາຍ ຈະພາກັນ ໄປງັນເຮືອນ ຕີຕາຍ ທີ່ຢູ່ບ້ານໃກ້ກັນເມັຽຂອງວິທຍາທອນຕົນນັ້ນຢາກໄປນຳເຂົາ ຜົວຈຶ່ງຫ້າມວ່າ "ນາງທົ່ງຄັບຢູ່ຈະໄປເຮືອນຄົນຕາຍບໍ່ຄວນ ຢ່າໄປເລີຍ" ເມັຽຕອບວ່າ "ຖ້າເຈົ້າຮັກລູກຂອງເຈົ້າ ໆ ຈົ່ງເອົາລູກຂອງເຈົ້າໄວ້ສາ ! ຂ້ອຍຈະມ່ວນຊື່ນນຳໝູ່ຈັກໜ່ອຍກ່ອນ" ວ່າແລ້ວມັນກໍເບັ່ງລູກອອກ ເອົາສົ່ງໃຫ້ຜົວ ໆ ຈຶ່ງກືນເອົາລູກນັ້ນລົງໄວ້ໃນທ້ອງ

ນາງວິທຍາທະຣີໄປຫລິ້ນຊື່ນມ່ວນນຳໝູ່ແລ້ວເລີຍບໍ່ກັບຄືນມາເພາະມັນບໍ່ຢາກມີລູກອີກ ຝ່າຍຜົວກືນລູກໄວ້ໃນທ້ອງ ເປັນເວລາເຫິງນານຈົນຄົບວັນອອກ ແຕ່ລູກບໍ່ມີທາງອອກ ມັນຈຶ່ງແຫກທ້ອງຂອງຕົນເອົາລູກອອກ ແລ້ວວິທຍາທອນຜູ້ນັ້ນກໍເຖິງຄວາມພິນາດຕາຍໄປ ເພາະສະນັ້ນເພິ່ນຈຶ່ງວ່າ

(ດ) “ຄວາມເປັນຜູ້ມີສີລປະວິທຍາຫລັກແຫລມນັ້ນ ຜູ້ມີປັນຍາ ຄວນສະແດງແຕ່ພໍປະມານ; ວິທຍາທອນທິງຄັບອັນເປັນຂອງທີ່ຕົນບໍ່ຄວນເຮັດ ເລີຍຕາຍເສັຽເພາະອວດອ້າງວ່າ ຕົນມີສິລປະວິທຍາເລີດລົ້ນ.”

ງູໄດ້ຟັງນິຍາຍທີ່ເສນາບໍດີກົບເລົ່າມາດັ່ງນີ້ແລ້ວ ຍັງໜ່ຽວວອນພຣະຍາກົບປູ່ວ່າ “ຂ້າແຕ່ທ່ານຜູ້ອາຣະຍະ ຂ້າເຈົ້າເປັນຜູ້ອະນາຖາ ມາດ້ວຍຫວັງເພິ່ງທ່ານຜູ້ທະຣົງທັມ ປະກອບດ້ວຍເມດຕາ” ເພິ່ນຍັງວ່າ “ຜູ້ໃຈບຸນຍ່ອມອົດກະຣຸນາໃນຜູ້ອະນາຖາບໍ່ໄດ້ ເຖິງແມ່ນເຂົາຜູ້ນັ້ນຈະເຄີຍເປັນສັດຕູກໍຕາມ ກໍເມື່ອເປັນດັ່ງນີ້ ເຫດສັນໃດທ່ານຜູ້ມະຫາຕະນະ ຈຶ່ງຈະໃຫ້ຂ້າເຈົ້າຈົບຫາຍເສັຽ.”

ກົບຕົວນຶ່ງຊື່ ມະຫາຊັງຄະ ກ່າວວ່າ “ທັມມະຊາດຂອງງູຍ່ອມເປັນສັດຕູຂອງກົບມາຕັ້ງແຕ່ໃດ ໆ ຈະໃຫ້ເປັນມິດກັນບໍ່ໄດ້ດອກ ເພາະຂຶ້ນຊື່ວ່າສັດຕູແລ້ວ ໃຜ ໆ ຢ່າຜູກເປັນມິດເລີຍ, ໜູຢູ່ຮ່ວມຫ້ອງກັບງູໃນຖານະເປັນມິດຕາຍຮວມກັນ ງູຍັງບໍ່ວາຍຈະກິນໜູໃຫ້ໄດ້ ແຕ່ໜູມີປັນຍາຫາອຸບາຍເອົາຕົວພົ້ນໄປໄດ້

ງູຖາມວ່າ ເຣື່ອງເປັນຢ່າງໃດ ?

ກົບມະຫາຊັງຄະ ເລົ່ານິທານ

# ໕. ເຣື່ອງໜູກັບງູ

ແຕ່ກ່ອນ ມີໝໍງູຄົນນຶ່ງ ຈັບເອົາງູເຫົ່າຕົວນຶ່ງມາຂັງໃສ່ຕຸ້ມໄວ້ໄດ້ສາມວັນ ວັນນຶ່ງໝໍງູຈັບໜູໄດ້ຕົວນຶ່ງ ຈຶ່ງເອົາປ່ອຍໃສ່ຕຸ້ມເພື່ອໃຫ້ງູກິນ; ໜູນ້ອຍມີປັນຍາ ເວົ້າກັບງູວ່າ “ດູລາສະຫາຍ ທ່ານຢ່າຟ້າວກິນຂ້າພະເຈົ້າ ເພາະວ່າຖ້າທ່ານກິນຂ້າພະເຈົ້າແລ້ວ ທ່ານກໍຈະຖືກຂັງຕາຍຢູ່ໃນຕຸ້ມນີ້ ດັ່ງນັ້ນເຮົາມາເປັນມິດກັນຫາອຸບາຍອອກຈາກຕຸ້ມຂັງນີ້ດີກວ່າ ?”

ງູໄດ້ຟັງໜູເວົ້າ ຈຶ່ງຖາມວ່າ “ສະຫາຍຈະທຳອຸບາຍຢ່າງໃດ ?”

ໜູຕອບວ່າ “ຂ້າພະເຈົ້າຈະຂໍງອຍຫົວທ່ານຢືດຄໍຂຶ້ນໄປກັດຕຸ້ມໃຫ້ເປັນປ່ອງພໍລອດໄດ້” ງູເຫັນດີນຳ ຈຶ່ງໃຫ້ໜູຂຶ້ນຂີ່ຫົວແລ້ວຍືດຄໍຂຶ້ນໃຫ້ໜູກັດຕຸ້ມ ໃນຂະນະທຳການກັດຕຸ້ມຢູ່ນີ້ ໜູໄດ້ຂີ້ຍ່ຽວໃສ່ຫົວງູ ໆ ຄຽດຄຶດໄວ້ໃນໃຈວ່າ “ເວລາໃດໜູກັດປ່ອງແລ້ວ ກູຈັກກິນມັນເສັຽ”

ຝ່າຍໜູເມື່ອກັດປ່ອງຊອດແລ້ວ ກໍຟ້າວເຕັ້ນອອກແລ່ນໄປລີ້ຢູ່ບ່ອນນຶ່ງແລ້ວ ອວາຍໜ້າມາເວົ້າເຍີ້ຍວ່າ

(໔) “ແຮ້ ! ງູ ແຕ່ກ່ອນມາທ່ານເຄີຍເປັນສັດຕູຂອງພວກໜູ ບັດນີ້ໄດ້ມາເປັນມິດກັນກັບຂ້າພະເຈົ້າ ໃນເວລາຂ້າພະເຈົ້າກັດປ່ອງ (ເມື່ອສຳເຣັດແລ້ວ) ທ່ານກໍຈະກັບເປັນສັດຕູຂ້າພະເຈົ້າອີກ”

ງູໄດ້ຍິນກໍຄຽດ ແລ່ນອອກຈາກຕຸ້ມໄປ ເພື່ອຈະກິນໝູ ຝ່າຍໝໍງູມາເຫັນຈຶ່ງຈັບໄປຂັງໄວ້ໃນຕຸ້ມໜ່ວຍໃໝ່

ກິນນະຫາຊັງຄະ ເວົ້າຕໍ່ໄປວ່າ "ຊາດຕົງູນີ້ຍ່ອມເປັນສັດຕູບໍ່ຮູ້ບຸນຄຸນໃຜເລີຍ"

"ສັດຕູກັບກ່ອນແລ້ວ ເປັນມິດ
ມີຫົວໃຈຈິງຈິດ ຈອດໝັ້ນ
ພາຍລຸນແລ້ວເລີຍຄິດ ຄິດຈາກ
ມິດສະຫາຍຢ່າງນັ້ນ ເພິ່ງເວັ້ນແວນໄກ"

ງູໄດ້ຟັງກິນເລົ່ານິຍາຍມາປຽບທຽບກໍຄຽດ ກ່າວຕອບວ່າ "ທ່ານ ມັນທຸກະຣາດ ຜູ້ເປັນພຣະຍາຂອງພວກສູ ຍັງມີໃຈອີດູກູບາປາຄຸນາເປັນມິດກັບຂ້າພຣະເຈົ້າ ສ່ວນພວກສູມີແຕ່ຄວາມຂີ້ຖີ່ໜຽວແໜ້ນແມ່ນແຕ່ນ້ຳກິນກໍຍັງຫວງໄວ້ ບໍ່ມີໃຈເພື່ອແຜ່ສາເລີຍ ຄວາມໂລພາຂອງພວກສູນີ້ ຈະພາໃຫ້ສູຈິບຫາຍ ຄືໝາຈອກຕົວໂລບມາກນັ້ນເຫລະ"

ກິນທັງຫລາຍຖາມວ່າ ເຣື່ອງເປັນຢ່າງໃດ ?

ງູເລົ່ານິຍາຍ

## ໖. ເຣື່ອງໝາຈອກໂລບມາກ

ແຕ່ປາງກ່ອນ ມີພານປ່າຜູ້ນຶ່ງຊື່ ໄພຣິນ ຢູ່ບ້ານກັລຍານະກົດກ໌ ໃກ້ປ່າວິນທັຍ ວັນນຶ່ງຄືທະນູອອກໄປຫາຍິງເນື້ອຕາມເຄີຍ

ແຕ່ບັງເອີນບໍ່ພໍ້ເນື້ອ ຈົນເຖິງເວລາຄ້າຍຄ່ຳກໍ່ຕ່າວຄືນ ມາເຖິງບ່ອນນຶ່ງຈຶ່ງມາພໍ້ຊ້າງ ຊ້າງເຫັນນາຍພານກໍໄລ່ແທງ ນາຍພານແລ່ນຂຶ້ນໂພນປວກໜ່ວຍນຶ່ງ ແລ້ວຂຶ້ນທະນູຍິງໃສ່ຊ້າງ ດ້ວຍອຳນາດຂອງຢາພິດ (ໜ້ອງ) ຊ້າງກໍຕາຍໄປໃນທັນໃດ ໃນຂະນະນາຍພານລັ້ນທະນູໃສ່ຊ້າງຢູ່ນັ້ນ ງູເຫົ່າຕົວນຶ່ງທີ່ຢູ່ໃນໂພນປວກ ໄດ້ອອກມາຕອດນາຍພານ ໆ ຈຶ່ງເອົາຄັນທະນູຕີງູເຫົ່າຕົວນັ້ນຈົນຕາຍ ແລ້ວນາຍພານກໍຕາຍດ້ວຍອຳນາດພິດຂອງງູ

ເວລານັ້ນມີໝາຈອກຕົວນຶ່ງເດີນຫາອາຫານມາທາງນັ້ນ ໄດ້ເຫັນສັດ ໓ ຕົວຕາຍກອງກັນຢູ່ກໍດີໃຈເປັນລົ້ນເຫລືອ ຄິດໃນໃຈວ່າ "ປ້າດຕີໂທ ! ໂຊກລາບຢ່າງລົ້ນເຫລືອເກີດແກ່ເຮົາຢ່າງບໍ່ນຶກບໍ່ຝັນເລີຍ !" ດັ່ງເພິ່ນວ່າ!

"ຄວາມທຸກຍາກອັນບໍ່ໄດ້ຄາດໝາຍໄວ້ ຍ່ອມມາສູ່ນໍຣະຊົນໄດ້ສັນໃດ ຄວາມຜາສຸກກໍອາດມາສູ່ນໍຣະຊົນໄດ້ສັນນັ້ນ"

ເອົາລະເນື້ອທັ້ງ ໓ ນີ້ ເປັນອາຫານຂອງເຮົາໄດ້ຕັ້ງເຄິ່ງປີປາຍ ຄື ຊ້າງເປັນອາຫານໄດ້ຕັ້ງ ໖ ເດືອນ ຄົນໄດ້ ໗ ວັນ ແລະງູໄດ້ມື້ ໑

ແຕ່ວ່າໃນເວລາຫິວ ໆ ຈັ່ງຊີ້ກິນຫຍັງກໍແຊບ ສະນັ້ນໃນວັນນີ້ຕ້ອງແຫ້ນເອັນສາຍທະນູນີ້ກ່ອນ ເພາະຖ້າບໍ່ຫິວກໍຈະກິນບໍ່ລົງ ຄິດແລ້ວກໍແຫ້ນເອັນສາຍທະນູ ພໍສາຍຂາດ ຂາທະນູທີ່ຂຶ້ນກົງຢູ່ນັ້ນກໍ

ວັດຄືນໂດຍແຮງ ຟາດຖືກອົກໝາຈອກໃຈຂາດຕາຍທັນທີ ເພາະສະນັ້ນເພິ່ນຈຶ່ງວ່າ

(໕) "ບໍ່ຣະຊາດຢ່າເພິ່ງມີຄວາມໂລບລົ້ນພົ້ນປະມານ ໝາຈອກຖືກຂາທະນູຟາດຕາຍ ເພາະໂທດແຫ່ງຄວາມໂລພາ

ງູເວົ້າຕໍ່ໄປອີກວ່າ "ຂ້າພະເຈົ້າມາຫາພວກທ່ານກໍຫວັງຄວາມເປັນມິດ ບໍ່ໄດ້ໝາຍວ່າຈະເປັນສັດຕູ ເພິ່ນວ່າ "ບຸກຄົນຄວນທຳຄວາມຄຸງດຕອບ ໃນບຸກຄົນຜູ້ຄຸງດໃຫ້ຕົນ ແຕ່ຄວນປະພຶດປະຕິບັດໃຫ້ດີໃນຜູ້ຫວັງເປັນມິດ ຜູ້ໃດຄິດໂລບລ້ຽວເຂົາກ່ອນ ຜູ້ນັ້ນກໍໄດ້ຮັບຄວາມໂລບລ້ຽວຕອບຄືກັນ ດັ່ງວັທນະເສດຖີກັບວະສະນະເສດຖີສັນນັ້ນ

ກົບທັງຫລາຍຖາມວ່າ ເຣື່ອງເປັນຢ່າງໃດ ?
ງູເລົ່ານິຍາຍ

## ໗. ເຣື່ອງວັທນະເສດຖີກັບວະສະນະເສດຖີ

ປູ່ນະຄອນອຸທັຍທານີ ມີລູກເສດຖີ ໒ ຄົນ ເປັນສະຫາຍກັນ ຜູ້ນຶ່ງຊື່ ວັທນະ ອີກຜູ້ນຶ່ງຊື່ ວະສະນະ ສອງສະຫາຍລົງທຶນຊື້ເຫລັກບັນທຸກໃສ່ເຣືອສະເພົາໄດ້ສອງເຫລັ້ມ ເພື່ອເອົາໄປຂາຍແລກທອງຄຳທີ່ປະເທດສວັນນະພູມ ໂດຍມີສັນຍາກັນວ່າ ສິນຄ້າໃນເຣືອທັງສອງເຫລັ້ມນັ້ນກໍດີ ທອງຄຳທີ່ຈະແລກໄດ້ກໍດີ ນັບເປັນສິນຄ້າຮ່ວມກັນ ໄດ້ເສັຽທໍ່ກັນ ເມື່ອຕົກລົງກັນແລ້ວ ກໍເບີກສະເພົາອອກ

ຈາກທ່າໄປ ພໍໄປເຖິງກາງມະຫາສມຸດ ເຮືອສະເພົາຂອງວະສະບະຖືກຟອງຕີແຕກສະເພົາຫລົ່ມ ຂອງສິນຄ້າເສັງຫາຍໝົດ ສ່ວນຕົວວະສະບະ ຂີ່ຂອນແຜ່ນເປັ້ນແຜ່ນນຶ່ງລອຍເຂົ້າຝັ່ງໄດ້ ແລ້ວກໍພຍາຍາມຊັດເຊພະເນຈອນມາຈົນເຖິງບ້ານເມືອງຂອງຕົນ

ສ່ວນສະເພົາຂອງວັທນະໄປຕາມກະແສລົມດີ ຈົນເຖິງທ່າຂອງປະເທດສຸວັນນະພູມ ຂາຍເຫລັກແລກທອງຄຳໄດ້ກຳໄຣຫລາຍເຖິງ ៤ ທົບຂອງທຶນເດີມ ແລ້ວຊື້ເຮືອສະເພົາຕື່ມອີກ ៤ ເຫລັ້ມບັນທຸກຂອງຈົນເຕັມກັບຄືນມາອຸໄທທານີນະຄອນ; ພໍມາເຖິງທ່າເມືອງ ໄດ້ຊາບຂ່າວວ່າ ເຮືອຂອງວະສະບະຫລົ່ມ ຂອງເສັງຫາຍໝົດ; ວັທນະຄິດຢ້ານສະຫາຍມາຂໍແບ່ງປັນເອົາຊັບຕາມທີ່ສັນຍາກັນໄວ້ ຈຶ່ງທຳອຸບາຍມອບເຮືອແລະເຂົ້າຂອງທັງໝົດ ໃຫ້ເປັນຂອງຜູ້ອື່ນ ສ່ວນຕົນທຳເປັນຄົນທຸກນຸ່ງຜ້າຂາດມາເຮືອນ; ວະສະບະຜູ້ເປັນສະຫາຍໄດ້ຊາບຂ່າວກໍມາຢ້ຽມແລະຖາມວ່າ

"ສະຫາຍ ! ເຮົາໄດ້ຊາບຂ່າວວ່າ ເຮືອຂອງໂຕເດີນສະດວກດີຈົນໄປເຖິງທ່າເມືອງສຸວັນນະພູມ ເຫດສັນໃດສະຫາຍຈຶ່ງເປັນຄົນນຸ່ງຜ້າຂາດມາສັ້ນນີ້"

ວັທນະເສດດີຕົວະສ່ຽວວ່າ "ສະຫາຍເອີຍ ! ເຫດອັນບໍ່ເຄີຍມີກໍມາມີ ເຫດອັນບໍ່ເຄີຍເປັນກໍມາເປັນ ເຮືອຂອງເຮົາເດີນສະດວກດີໄປເຖິງທ່າເມືອງສຸວັນນະພູມແທ້ ແລ້ວເຮົາໄດ້ຈັດການຂົນເຫລັກໄປຝາກໄວ້ໃນກະຕຶບຫລັງນຶ່ງ ຕໍ່ຈາກນັ້ນກໍໄດ້ອອກເດີນຊອກຫາພວກ

ພໍ່ຄ້າ ຜູ້ຈະຮັບຊື້ເຫລັກເປັນເວລາຫລາຍວັນ ເມື່ອໄດ້ຕົກລົງຣາຄາກັນແລ້ວ ຂ້າພະເຈົ້າກໍພາພວກພໍ່ຄ້າມາຈະຂົນເອົາເຫລັກໄປ ແຕ່ພໍໄຂປະຕູກະຕຶບອອກ ເລີຍບໍ່ເຫັນເຫລັກຈັກຕອນ ຂ້າເຈົ້າມີຄວາມເສັຽໃຈຈົນເກືອບສລົບ ໄດ້ຖາມພວກຊາວບ້ານທີ່ຢູ່ໃກ້ ໆ ນັ້ນວ່າເຫລັກຂ້າເຈົ້າໄປໃສໝົດ ເຂົາບອກວ່າ "ໜູກິນໝົດແລ້ວ" ຂ້າເຈົ້າກໍໝົດປັນຍາ ຈຶ່ງຂາຍສະເພົາເຫລັ້ມນັ້ນ ຊື້ກົບລ້ຽງຊີວິດຕໍ່ມາເຫິງນານເອົ້າ ທີ່ນັ້ນເລີຍໝົດຈຶ່ງໄດ້ເປັນຄົນທຸກຍາກຫາອັນຈະກິນບໍ່ມີດັ່ງຕາສະຫາຍເຫັນຢູ່ນີ້ ພາຍລຸນມີສະເພົາຂອງພວກເມືອງເຮົານີ້ໄປຄ້າ ຂ້າພະເຈົ້າຈຶ່ງໄດ້ອາສັຍເຂົາຄືນມາ

ວະສະນະ ໄດ້ຟັງຄຳສະຫາຍເວົ້າປະພຶດເຫດດັ່ງນັ້ນກໍເຊື່ອວ່າເປັນຈິງ ຈຶ່ງເລົ່າໂລມສະຫາຍວ່າ ສະຫາຍເອີຍ ! ຈົ່ງສງົບ ພໍໃຈໃນພາວະຂອງເຮົາທີ່ເປັນຢູ່ໃນເວລານີ້ທີ່ນີ້ເຖີດ ເພາະເພິ່ນວ່າ

ທຸກຄົນຈະຕ້ອງຮັບຄວາມສຸກທີ່ມີມາ, ທຸກທີ່ມີມາກໍຈະຕ້ອງຮັບຄືກັນ; ຕົນກຽນປິ່ນວຽນໄປສັນໃດ, ສຸກກໍດີ ທຸກກໍດີ ຍ່ອມຜັດຜ່ຽນວຽນມາສັນນັ້ນ

ສູເຈົ້າມີຊັບ ມັກອວດອ້າງຈອງຫອງ, ຖ້າເສັຽຊັບແລ້ວຈະບໍ່ຊົບເຊົາເຫງົາຫງ່ວມນໍ້ ! ອັນພາວະຂຶ້ນ ໆ ລົງ ໆ ຂອງມະນຸດຄືກັນກັບໜ່ວຍກະຕໍ້ທີ່ເຕະຫລິ້ນ

ຮົ່ມເງົາຂອງເຝື່ອ ໑. ເປັນໄມຕີກັບຄົນຂີ້ໂຫດ ໑. ຮວງເຂົ້າໃໝ່ ໑. ການສ້າງວາດກັບສັດຕີ ໑. ຄວາມເປັນໜຸ່ມ ໑. ແລະ

ຄວາມນັ້ງນີ ໑.   ເຫລົ່ານີ້ຈະໃຫ້ຄວາມເບີກບານໃຈໄດ້ພຽງຊົ່ວຄາວ ທີ່ນັ້ນ

ມະນຸດບໍ່ຄວນຈະຮ້ອນຮົນໃຫ້ເກີນສ່ວນ   ໃນການຫາກິນລ້ຽງ ຊີບ ເພາະວ່າພຣະເປັນເຈົ້ານິຣະມິດໄວ້ສຳເຣັດແລ້ວ

ເບິ່ງແຕ່ນົມທັງສອງຂອງນາງດາ ພໍລູກເກີດມາ ກໍມີກະສີ ຣະຫລັ່ງໄຫລອອກ ຟັງອີກຈັກໜ່ອຍສະຫາຍ ທ່ານຜູ້ໃດ ສ້າງໃຫ້ ຫົງມີຂົນຂາວ,  ໃຫ້ນົກແຂກແກ້ວມີຂົນຂຽວ,  ໃຫ້ນົກຍູງມີຂົນ ສະລັບສີ; ທ່ານຜູ້ນັ້ນກໍຄົງສ້າງແນວລ້ຽງຊີບໄວ້ໃຫ້ສູເຈົ້າຄືກັນ

ຂໍເຊີນຟັງຂໍ້ຣະຫັດຂອງສັດບຸຣຸດອີກປະການນຶ່ງເຖີດສະຫາຍ! (ຄື) ຊັບທີ່ທ້ອນຫອມໄວ້ ໃຫ້ເກີດຄວາມທຸກກັງວົນຊັ້ນນຶ່ງກ່ອນ ຄັນ ວິບັດໄປກໍພາໃຫ້ເດືອດຮ້ອນເສັ້ງດາຍ ເທື່ອນອຸດົມດ້ວຍສົມບັດ ກໍພາ ໃຫ້ຫຼົງໄຫຼ; ຈັ່ງຊີ້ ຄວາມນັ້ງນີ ຈະເປັນເຫດນຳຄວາມສຸກມາ ໃຫ້ຢ່າງໃດ ?

ຜູ້ປາຖນາຊັບ ເພື່ອພ່ຳເພ້ງທັ້ນ   ຢ່າປາຖນາເລີຍດີກວ່າ ຫລີກໃຫ້ພົ້ນເປື້ອນຕົນກ່ອນ ດີກວ່າເປື້ອນແລ້ວຈຶ່ງລ້າງ

ວະສະນະ ກ່າວເລົ່າໂລມສະຫາຍດ້ວຍຂໍ້ທັມດັ່ງນີ້ແລ້ວກໍລາ ເມືອ   ສ່ວນວັທນະເສດຖີ   ເມື່ອໄດ້ລ່າຍພາງສະຫາຍດັ່ງນັ້ນແລ້ວ ກໍຍູທ່າງໃຊ້ຈ່າຍຊັບທີ່ໄປຄ້າໄດ້ມານັ້ນຢ່າງສຳຣານບານໃຈ

ຕໍ່ມາມີພໍ່ຄ້າຄົນນຶ່ງຢູ່ໃກ້ເຮືອນວັທນະເສດຖີ ໄດ້ເຫັນວັທນະເສດຖີມີສິນບັດເຂົ້າຂອງໃຊ້ຈ່າຍບໍ່ອຶດຢາກ ຈຶ່ງມາບອກວະສະນະເສດຖີຜູ້ສະຫາຍທີ່ທຸກໄຮ້ ວ່າ

"ດູຮາທ່ານວະສະນະ ຂ້າພະເຈົ້າໄດ້ສັງເກດເຫັນວັທນະຜູ້ສະຫາຍຂອງທ່ານ ມີຊັບອຸດົມຫລາຍ ຂໍ້ຄວາມທີ່ເຂົາເວົ້ານຳທ່ານໃນວັນແຣກທີ່ກັບມາແຕ່ຄ້າຂາຍວ່າ ໜູກິນເຫລັກໝົດ ຈຶ່ງໄດ້ເປັນຄົນທຸກນັ້ນ ເຫັນຈະບໍ່ເປັນຈິງໄດ້ ເພາະບໍ່ມີສັກຂີພິຍານ, ເພິ່ນວ່າຄຳເວົ້າທີ່ບໍ່ມີສັກຂີພິຍານ (ຄືບໍ່ເຫັນແຈ້ງຕໍ່ຕາ) ນັ້ນບໍ່ຄວນເຊື່ອດັ່ງດຽວກັບຊາວເມືອງທັງຫຼາຍທີ່ບໍ່ເຊື່ອຟັງຄຳຂອງລູກຊາຍຂອງທ່ານມູລກະວີທີ່ກ່າວວ່າເຫັນຫີນຟູປາງນັ້ນ

ວະສະນະເສດຖີຖາມວ່າ ເຣື່ອງເປັນຢ່າງໃດ ?

ພໍ່ຄ້າ ເລົ່ານິຍາຍ

## ໙. ເຣື່ອງນັກປາດຊື່ມູລກະວີ

ແຕ່ປາງກ່ອນ ມີນັກປາດຜູ້ນຶ່ງຊື່ ມູລກະວີ ໄດ້ພາລູກຊາຍໄປມັດຊິມະປະເທດກັບພວກພໍ່ຄ້າສະເພົາຊາວເມືອງມັດຊິມະປະເທດພໍໄປເຖິງກາງມະຫາສະມຸດ ທຸກ ໆ ຄົນໃນເຮືອ ໄດ້ເຫັນກ້ອນຫີນກ້ອນນຶ່ງຟູຢູ່ເໜືອນ້ຳ ເປັນໜ້າອັສຈັນ ພາຍລຸນມູລກະວີກັບລູກຊາຍ

ກັບຄືນມາບ້ານເມືອງຂອງຕົນກັບພວກພໍ່ຄ້າສະເພົາພວກອື່ນອີກຕ່າງຫາກ  ລູກຊາຍມູລກະວີຈຶ່ງເວົ້າເຣື່ອງທີ່ຕົນໄດ້ເຫັນກ້ອນຫີນຟູນ້ຳນັ້ນໃຫ້ຊາວເມືອງຟັງ  ພວກຊາວເມືອງບໍ່ເຊື່ອຈຶ່ງເກີດຫົວພະນັນກັນຂຶ້ນ

ພວກຊາວເມືອງຖາມວ່າ "ຂໍ້ຄວາມທີ່ທ່ານວ່າເຫັນກ້ອນຫີນຟູນ້ຳນັ້ນ ມີໃຜເຫັນນຳທ່ານແດ່ ພໍຈະເປັນສັກຂີພິຍານ" ລູກຊາຍມູລກະວີວ່າ "ບິດາຂອງຂ້າພະເຈົ້າເປັນຜູ້ເຫັນນຳ" ດັ່ງນັ້ນ ພວກຊາວເມືອງຈຶ່ງພາລູກຊາຍມູລກະວີ  ໄປເຝົ້າພຣະຣາຊາເພື່ອຂໍໃຫ້ພຣະອົງເປັນຜູ້ຕັດສິນ  ເມື່ອໄດ້ໄປຊ້ອງໜ້າພຣະຣາຊາຈຶ່ງຖາມທ່ານມູລກະວີຜູ້ບິດາຂອງເຂົາວ່າ "ທ່ານນັກປາດ ທ່ານໄດ້ເຫັນກ້ອນຫີນຟູ ມີຈິງດັ່ງຄຳລູກຊາຍທ່ານວ່າແທ້ຫລື ?"

ທ່ານນັກປາດມູລກະວີ ຄຶດວ່າ "ເຖິງແມ່ນເຮົາເຫັນແລະບອກວ່າ ມີຈິງແທ້ ໃຜ ໆ ກໍຄົງບໍ່ເຊື່ອເຮົາ ເພາະເຮົາເປັນພໍ່ລູກກັນ ຖ້າເມື່ອຄົນທັງຫລາຍບໍ່ເຊື່ອແລ້ວ ຄວາມອັປຍົດກໍຈະມີມາເຖິງເຮົາ ຍ້ອນຄົນທັງຫລາຍຈະຫາວ່າເຮົາເວົ້າລ່າຍ  ຄຶດແລ້ວດັ່ງນີ້ຈຶ່ງທູນພຣະຣາຊາເປັນຄຳອຳອຽງວ່າ "ຂ້າແຕ່ມະຫາຣາດ ຂຶ້ນຊື່ວ່າ ກ້ອນຫີນນັ້ນບໍ່ຫ່ອນຟູ ໃນບ້ານໃນເມືອງຈັກເທື່ອ" ພຣະຣາຊາໄດ້ຟັງຄຳກາບທູນຂອງທ່ານມູລກະວີ ດັ່ງນັ້ນ ກໍເຂົ້າພະໄທວ່າ ລູກຊາຍມູລກະວີເວົ້າລ່າຍ  ຈຶ່ງທົງຕັດສິນໃຫ້ລູກຊາຍມູລກະວີເສັຽຊັບຕາມທີ່ໄດ້ສັນຍາກັນໄວ້ກັບພວກຊາວເມືອງ

ສ່ວນ ລູກຊາຍ ຂອງທ່ານ ມູລກະວີ ເສັຽເຂົ້າ ຂອງ ເປັນອັນມາກ ກໍມີຄວາມຕໍ່າຕ້ອຍນ້ອຍໃຈ ຈົນບໍ່ເປັນອັນຢູ່ອັນກິນ ເພາະສະນັ້ນເພິນ ຈຶ່ງວ່າ

ບັນດາກິຈການ ຂອງບຸຣຸດ ຜູ້ມີຄວາມຮູ້ນ້ອຍ ເມື່ອສ້ຽງ ຊັບແລ້ວ ກໍ່ລົ້ມລະລາຍ ເໜືອນດັ່ງນໍ້າຮ່ອງໃນຣະດູແລ້ງ ຜູ້ມີຊັບກໍມີເພື່ອນຝູງ ຜູ້ມີຊັບກໍມີພີ່ນ້ອງບໍຣິວານ, ຜູ້ມີຊັບກໍນັບວ່າເປັນບັນດິດອີກຊ້ຳ

ໃນຄວາມຈົນແລະຄວາມຕາຍທັງສອງ ຖືກັນວ່າ ຄວາມຈົນ ເປັນຂອງຊົ່ວຮ້າຍທີ່ສຸດ ເພາະຄວາມຕາຍໃຫ້ທຸກແຕ່ເວລາດຽວ ສ່ວນຄວາມຈົນທໍຣະມານໃຫ້ທົນຮັບທຸກຢູ່ຕລອດເວລາ

ຝ່າຍມູລກະວີ ເຫັນບຸດຂອງຕົນເສົ້າໂສກກໍສົງສານ ຈຶ່ງ ຄິດຫາອຸບາຍທີ່ຈະໃຫ້ໄດ້ຊັບຄືນມາ ແລະເພື່ອແກ້ຄຳກ່າວຫາຂອງ ຊາວເມືອງທີ່ຫາວ່າ ລູກຊາຍຂອງຕົນເວົ້າລາຍດ້ວຍຄຳວ່າເຫັນຫີນ ຟູ ແຕ່ບໍ່ມີພີຍານເຫັນນຳ ດັ່ງນັ້ນ ທ່ານມູລກະວີຈຶ່ງຈັດຫາອາຫານ ແລະໝາກໄມ້ຕ່າງ ໆ ທີ່ລີງມັກ ແລ້ວເຂົ້າໄປໃນປ່າແຫ່ງນຶ່ງ ທີ່ມີ ລີງຫລາຍ ເອົາໝາກໄມ້ແລະອາຫານແຈກຢາຍໃຫ້ພວກລີງກິນ ທຳດັ່ງນີ້ທຸກ ໆ ວັນເຫິງນາຈົນຄຸ້ນເຄີຍກັບລີງແລ້ວ ຈຶ່ງແອບໃຫ້ລີງ ຟ້ອນດ້ວຍທ່າທາງຕ່າງ ໆ ເມື່ອເຫັນໄດ້ການແລ້ວ ຈຶ່ງອານັດລີງ ໄວ້ດ້ວຍກຸສະໂລບາຍຂອງຕົນວ່າ "ຢ່າຟ້ອນຂັບ ໃຫ້ຄົນຫລາຍຄົນ ເຫັນເປັນອັນຂາດ ນອກຈາກຄົນດຽວ ແລະຕົວຂອງເຮົາທໍ່ນັ້ນ" ຄັນ ໃຫ້ອານັດສັນຍາແກ່ລີງແລ້ວ ກໍເຂົ້າມາພຣະນະຄອນ ຫາອຸບາຍ

ທູນພຣະຣາຊາໄປເຊີດເນື້ອໃນປ່ານັ້ນ ແລ້ວຕົວທ່ານມູລກະວີໄດ້ລອບອອກໄປລີ້ຢູ່ປ່າກັບໝູ່ລີງ

ພຣະຣາຊາສະເດັດອອກໄປເຊີດເນື້ອ ບັງເອີນມີກວາງຕົວນຶ່ງແລ່ນຜ່ານໜ້າ ພຣະຣາຊາຂຶ້ນມ້າໄດ້ກໍຖົບບຳ ກວາງເຂົ້າໄປໃນປ່າເລິກ ຈົນພວກເສນານຳບໍ່ທັນ ແລ້ວພຣະອົງກໍເລີຍຫລົງເຂົ້າໄປໃນປ່າລີງ ທ່ານມູລກະວີສັງເກດເຫັນວ່າ ພຣະຣາຊາສະເດັດມາໃນທີ່ນັ້ນແລ້ວ ຈຶ່ງໃຫ້ອານັດແກ່ພວກລີງ ແລ້ວລີງທັງຫລາຍກໍພາກັນຟ້ອນປ້ອນເຕັ້ນໄຕ່ໄປມາ ດ້ວຍທ່າທາງຕ່າງ ໆ ອັນເປັນທີ່ນ່າເບິ່ງນ່າຫົວຫລາຍ ພຣະຣາຊາໄດ້ເຫັນກໍງຶດງໍ້ອັສຈັນເລີຍປຸດປະທັບເບິ່ງລີງຟ້ອນຢູ່ຫັ້ນ ທັງເບີກບານພຣະໄທຊື່ນມ່ວນຫົວຂວັນຢູ່ຜູ້ດຽວຈົນເຖິງເວລາຄ້າຍຄ່ຳ

ສ່ວນພວກເສນາອາມາດທັງຫລາຍ ບໍ່ເຫັນພຣະຣາຊາກັບມາ ກໍພາກັນຊອກຫາ ຈຶ່ງໄປເຫັນພຣະຣາຊາປະທັບຢູ່ໃນປ່າລີງ ແຕ່ວ່າພວກລີງພໍເຫັນຄົນອື່ນ ໆ ເຂົ້າໄປກໍເຊົາຟ້ອນ

ບັດນັ້ນ ພວກເສນາອາມາດ ຈຶ່ງທູນຖາມພຣະຣາຊາວ່າ "ມະຫາຣາດ ! ດ້ວຍເຫດອັນໃດພຣະອົງຈຶ່ງມາປະທັບຢູ່ທີ່ນີ້" ພຣະຣາຊາຕັດຕອບວ່າ "ເປັນການແປກປະຫລາດຫລາຍແທ້ ໆ ເສນາ ! ຄືເມື່ອເຮົານຳໄລ່ກວາງມາເຖິງທີ່ນີ້ ກໍໄດ້ເຫັນພວກລີງຢູ່ເທິງຕົ້ນໄມ້ນັ້ນ ປ້ອນຟ້ອນແອະແອ່ນແລ່ນປອກກັນໄປມາ ເປັນທີ່ຄວນຫົວສນາອະພິຣົມເປັນອັນມາກ ເຮົາຈຶ່ງພັກເຊົາເບິ່ງພວກມັນດ້ວຍຄວາມເບີກ

ບານໃຈ" ພວກອາມາດໄດ້ຟັງ ກໍພາກັນຫລຽວຂຶ້ນໄປເບິ່ງເທິງ ຕົ້ນໄມ້ທີ່ພຣະຣາຊາຊີ້ບອກ ແຕ່ບໍ່ເຫັນລີງຟ້ອນຈັກໂຕ ເຫັນ ແຕ່ມັນເຕັ້ນໄຕ່ຊອກກິນໝາກໄມ້ຢູ່ຕາມທັມມະດາ ກໍພາກັນເຂົ້າໃຈ ວ່າ ພຣະຣາຊາເສັຽສະຕິ ເພາະຖືກຜີປ່າມາບັງຄັບໃຫ້ຫລົງໄຫລ ຈຶ່ງຄຸມເອົາພຣະຣາຊາກັບຄືນພຣະນະຄອນ

ພຣະຣາຊາປະທັບຢູ່ໃນພຣະຣາຊວັງ ໄດ້ຄືນນຶ່ງ ໃນຄືນນັ້ນ ພຣະອົງບັນທົມບໍ່ຫລັບເລີຍ ເພາະມີພຣະໄທອາລັຍຫລີງຢູ່ນຳ ພວກລີງ ດັ່ງນັ້ນ ພຣະອົງຈຶ່ງສະເດັດຂຶ້ນມ້າລັກອອກໜີຈາກ ພຣະນະຄອນເຂົ້າໄປໃນປ່າລີງ ຕັ້ງແຕ່ພໍແຈ້ງເສີງສາງ ຝ່າຍ ພວກລີງ ພໍເຫັນພຣະຣາຊາສະເດັດມາ ກໍພາກັນຢ້ອນຟ້ອນຫລິ້ນ ໃຫ້ພຣະຣາຊາທອດພຣະເນດ ຂນະນັ້ນ ທ່ານມູລກະວີບັນດິດກໍ ອອກມາເຝົ້າພຣະຣາຊາແລ້ວເຂົ້າໄປລີ້ຊ່ອນຢູ່ບ່ອນເກົ່າ

ຄັນຮຸ່ງແຈ້ງມາ ພວກອຳມາດພາກັນຂຶ້ນໄປເຝົ້າພຣະຣາຊາ ແຕ່ບໍ່ເຫັນພຣະອົງປະທັບຢູ່ໃນຜາສາດ ຈຶ່ງພາກັນອອກທ່ຽວຊອກ ຫາ ແລ້ວກໍໄດ້ໄປເຫັນພຣະອົງປະທັບຢູ່ໃນປ່ານັ້ນ ພວກອຳມາດ ທູນຖາມວ່າ "ຂ້າແຕ່ມະຫາຣາດ ເຫດການເປັນຈັ່ງໃດ ພຣະອົງ ຈຶ່ງສະເດັດມາຢູ່ທີ່ນີ້ອີກ" ພຣະຣາຊາຕັດວ່າ "ດູລາທ່ານທັງຫລາຍ ຕັ້ງແຕ່ຂ້າພະເຈົ້າເກີດມາ ຍັງບໍ່ເຄີຍໄດ້ເຫັນການຟ້ອນແບບໃດ ແລະຂອງຜູ້ໃດທີ່ເປັນໜ້າທັສນາ ທໍ່ກັບການຟ້ອນຂອງລີງໝູ່ນີ້ຈັກ ເທື່ອ ເພາະຈັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ມາທີ່ນີ້ ເພື່ອທັສນາການ

ຟ້ອນຂອງພວກລິງ" ພວກອຳມາດໄດ້ຟັງພຣະຣາຊາຕັດດັ່ງນັ້ນອີກ ພ້ອມກັບພາກັນເຫງນໜ້າເບິ່ງເທິງຕົ້ນໄມ້ ແຕ່ບໍ່ເຫັນລິງຟ້ອນ ເລີຍພາກັນລົງຄວາມເຫັນວ່າ ພຣະຣາຊາເປັນບ້າ ເພາະຖືກຜີປ່າເຂົ້າສິງ ຈຶ່ງຄຸມເອົາຕົວພຣະຣາຊາກັບຄືນພຣະນະຄອນ ແລ້ວຈັດການໃສ່ຊວນເຫລັກໄວ້

ພຣະຣາຊາທົງພິໂຣດໃຫ້ພວກອຳມາດ ຕັດວ່າ "ກູພຣະອົງບໍ່ໄດ້ເປັນບ້າ ກູພຣະອົງບໍ່ຖືກຜີປ່າເຂົ້າສິງແຕ່ຢ່າງໃດ ແຕ່ກູເຫັນລິງຟ້ອນ ກູສະອອນໃຈຕ່າງຫາກ ແລະກູປາກເບິ່ງແຕ່ລິງຟ້ອນທັ້ນນັ້ນ" ພວກອຳມາດຖຽງວ່າ "ພຣະອົງຕັດບອກວ່າ ເຫັນລິງຟ້ອນນັ້ນ ພຣະອົງຕັດເວົ້າຜູ້ດຽວ ຜູ້ອື່ນບໍ່ເຫັນນຳ ພວກຂ້າພຣະບາດກໍບໍ່ເຫັນມັນຟ້ອນ ດັ່ງນັ້ນຈະໃຫ້ເຊື່ອໄດ້ຢ່າງໃດ ວ່າພຣະອົງບໍ່ເສັງສະຕິ" ພຣະຣາຊາຕັດອ້າງພະຍານວ່າ "ທ່ານນັກປາດມູລກະວີ ເຫັນນຳກູ ສູທັງຫລາຍຈົ່ງຖາມທ່ານມູລກະວີເບິ່ງວ່າ ຄຳທີ່ກູເວົ້ານີ້ຈະແມ່ນຫລືບໍ່ແມ່ນ" ພວກອຳມາດໄດ້ຟັງດັ່ງນັ້ນ ຈຶ່ງໃຫ້ໄປເຊີນທ່ານນັກປາດມູລກະວີມາຊອງພຣະພັກຂອງພຣະຣາຊາ ແລະທ່ານມູລກະວີກໍຮັບວ່າ ໄດ້ເຫັນລິງຟ້ອນນຳພຣະຣາຊາແທ້ ພວກເຂົາຈຶ່ງແກ້ພຣະຣາຊາອອກຈາກຊວນເຫລັກ ແລ້ວທ່ານນັກປາດມູລກະວີ ຈຶ່ງໄດ້ກ່າວພາສິດສະແດງຫລັກຖານໃນການທີ່ລູກຊາຍຂອງຕົນໄດ້ເຫັນກ້ອນຫີນຟູໃນມະຫາສມຸດໃຫ້ພຣະຣາຊາຟັງເປັນສໂລກຄາຖາວ່າ

(໗) "ຂ້າແຕ່ມະຫາຣາດ ຖ້ອຍຄຳທີ່ (ລູກຊາຍຂ້າພຣະບາດ ກ່າວແຕ່ກ່ອນ) ວ່າ ກ້ອນຫີນໄຫຼໄປເທິງນ້ານັ້ນ ເຖິງແມ່ນເຫັນ ຈິງແທ້ (ແຕ່ພວກຊາວເມືອງ) ບໍ່ເຫັນນຳ ກໍຄືກັນກັບຄຳ (ທີ່ ພຣະອົງກ່າວ) ວ່າເຫັນລີງຟ້ອນ (ແຕ່ພວກອຳມາດບໍ່ເຫັນນຳກໍ ເລີຍບໍ່ເຊື່ອ) ສັນນັ້ນ

ພຣະຣາຊາໄດ້ສະດັບຄຳອຸປມາຂອງທ່ານມູລກະວີ ກໍມີ ພຣະໄທຍິນດີເປັນອັນຍິ່ງ ຈຶ່ງປີງພຣະຣາຊທານຣາງວັນແກ່ທ່ານ ມູລກະວີແລະລູກຊາຍຂອງທ່ານເປັນອັນມາກ

ຊາຍພໍ່ຄ້າເລົ່ານິຍາຍສຸດແລ້ວ ຈຶ່ງເວົ້າກັບວະສະບະເສດຖີ ວ່າ "ທ່ານຜູ້ຈະເຣີນ ຖ້ອຍຄຳທີ່ສະຫາຍຂອງທ່ານກ່າວວ່າ ໜູ ກິນເຫລັກໝົດນັ້ນ ຕ້ອງເປັນຄຳຕົວະລ່າຍ ເພາະເຂົາຫວັງໂລບ ເອົາຊັບນັ້ນແຕ່ຜູ້ດຽວ ດັ່ງນັ້ນ ໃນເຣື່ອງນີ້ທ່ານຕ້ອງຄິດຫາອຸບາຍ ແກ້ຕອບ" ວະສະບະເສດຖີໄດ້ຟັງຄຳເຕືອນຂອງຊາຍພໍ່ຄ້າ ກໍຄິດ ຮ່ຳໄວ້ໃນໃຈ

ວັນນຶ່ງ ລູກຊາຍຂອງວັທນະເສດຖີໄດ້ໄປຫລິ້ນເຮືອນຂອງ ວະສະບະເສດຖີຜູ້ສະຫາຍ ວະສະບະເສດຖີຈັບເອົາທ້າວນ້ອຍນັ້ນ ໄປເຊື່ອງໄວ້ແລ້ວ ຈຶ່ງທຳກິນຮ້ອງໄຫ້ແລ່ນໄປຫາສ່ຽວ ບອກວ່າ "ຈິບຫາຍແລ້ວສ່ຽວເຮີຍ! ນົກຍ່ຽວວອດບິນລົງມາຊູດເອົາລູກຂອງ ໂຕໄປກິນແລ້ວ! ເວລານັ້ນພວມຍ່າງຫລິ້ນຢູ່ກາງເດີ່ນບ້ານ" ວັທ ນະເສດຖີໄດ້ຟັງດັ່ງນັ້ນ ບໍ່ເຊື່ອວ່າເປັນຈິງ ຈຶ່ງຖຽງວ່າ "ນົກຍ່ຽວ

ວອກຫລືນົກອື່ນ ໆ ກໍຕາມ ບໍ່ທ້ອນຊິຄາບເອົາຄົນໄປກິນໄດ້ ມິ່ງບໍ! ໂລບລ້ຽວເອົາລູກກູໄປຂາຍກິນ ຣື! ກູບໍ່ຍອມ" ວ່າແລ້ວກໍນຳຄວາມໄປຟ້ອງຕໍ່ພຣະຣາຊາ ພຣະຣາຊາທົງສັ່ງໃຫ້ຮຽກວະສະນະເສດຖີມາ ຕັດຖາມວ່າ "ທ່ານເອົາລູກຊາຍຂອງວັທນະເສດຖີໄປຂາຍໃສ ? ຈົ່ງບອກມາ" ວະສະນະເສດຖີທູນວ່າ "ຂ້າພຣະບາດບໍ່ໄດ້ເອົາໄປຂາຍ ແມ່ນ, ນົກຍ່ຽວວອກຊູດເອົາໄປທາງໃດກໍບໍ່ຮູ້" ພຣະຣາຊາຕັດຂນາບ "ນີ້! ທ່ານຢ່າມາຕົວະລ່າຍເລີຍ ນົກຕາຍຮ່ານັ້ນແນວໃດ ຈິມາຊູດເອົາຄົນໄປໄດ້" ວະສະນະທູນຕອບ "ພຣະຣາຊອາຍາບໍ່ພົ້ນເກົ້າ! ຂ້າພຣະບາດບໍ່ໄດ້ຕົວະລ່າຍກ່ອນເລີຍ ວັທນະເສດຖີສະຫາຍຂອງຂ້າພຣະບາດ ເປັນຜູ້ຕົວະລ່າຍຂ້າພຣະບາດກ່ອນຕ່າງຫາກ ວ່າໜູກິນເຫລັກອັນເປັນຂອງສິນຄ້າຮ່ວມກັນນັ້ນໝົດ" ວ່າແລ້ວ ວະສະນະເສດຖີຈຶ່ງເລົ່າເຣື່ອງທີ່ເປັນມາທັງໝົດ ຕລອດຈົນໄດ້ເອົາລູກຂອງສ່ຽວໄປເຊື່ອງໄວ້ແລ້ວມາຕົວະວ່ານົກຍ່ຽວວອກຊູດເອົາໄປໃຫ້ພຣະຣາຊາຟັງ ແລະຂໍໃຫ້ພຣະຣາຊາທົງພິຈາຣະນາຕັດສິນຄະດີເຣື່ອງນີ້ຢ່າງບຸດທັມ

ພຣະຣາຊາທົງພິຈາຣະນາດູຢ່າງຖ້ວນຖີ່ ຮູ້ວ່າ ສອງສະຫາຍຕ່າງຄົນຕ່າງຕົວະລ່າຍກັນ ຈຶ່ງຕັດສິນບັງຄັບໃຫ້ວັທນະເສດຖີແບ່ງຊັບທີ່ຄ້ານານັ້ນໃຫ້ວະສະນະເສດຖີເຄິ່ງນຶ່ງ ແລະໃຫ້ວະສະນະເສດຖີສົ່ງລູກຊາຍຄືນໃຫ້ແກ່ວັທນະເສດຖີແລ້ວສັ່ງສອນສອງສະຫາຍ ບໍ່ໃຫ້ມີໃຈໂລບລ້ຽວຕໍ່ກັນອີກຕໍ່ໄປ ຍ້ອນວ່າ ຄວາມໂລບລ້ຽວລ່າຍພາງ

ນີ້ພາໃຫ້ເສັຽມິດຂາດການຕິດຕໍ່ ມີແຕ່ກໍ່ໃຫ້ເປັນເວນກັນ ເພິນ ຈຶງວ່າ

(ກ) "ບຸກຄົນຄວນທຳຄວາມຄົດໂກງຕອບ ໃນບຸກຄົນຜູ້ຄົດໂກງຕໍ່ຕົນ ຄວາມປະພຶດຊື່ສັດ ໃນບຸກຄົນຜູ້ເປັນບັນດິດ ດັ່ງດຽວກັບວະສະບະ ເສດຖີ ເຮັດຕອບໃຫ້ວັທນະເສດຖີ ຜູ້ມີຄວາມໂລບຫລາຍສັນນັ້ນ"

ດັ່ງນັ້ນ ເທວະດາຕົນຮັກສາໂລກ ຈຶງກ່າວຄຳໂສກອັນນີ້ໄວ້ ໃຫ້ຈື່ຈຳວ່າ

ຄົນໃດມັກໂລບລ້ຽວ ລັບບັງ
ມີຈິດໃຈຈິງຊັງ ເພື່ອນພ້ອງ
ຄົນນັ້ນເມື່ອພາຍຫລັງ ເຂົາຂົນ ໄດ້ແຮ
ໂທດຫນັກຕົກຖືກຕ້ອງ ເຖິງແທ້ ທັບຕົນ

ງູເລົ່ານິຍາຍອັນນີ້ໃຫ້ກົບທັງຫລາຍຟັງແລ້ວ ຈຶງກ່າວເຕີມ ອີກວ່າ "ພວກສູມີແຕ່ຄວາມໂລບໂລພາ ຄວາມຂີ້ຖີ່ຫວງແຫນ ບໍ່ ປາກແບ່ງປັນແບວທີ່ຕົນມີໃຫ້ຜູ້ອື່ນ ກູປາກນ້ຳຊິຕາຍມາຂໍກິນກໍ່ບໍ່ ໃຫ້ ດັ່ງນີ້ສູກໍຈັກເປັນຄືວັທນະເສດຖີທີ່ກ່າວມານັ້ນເອງ"

ບັດນັ້ນກົບໂຕນຶ່ງຊື່ ຄິຕບານ ກ່າວວ່າ "ເຮີຍ! ງູຖ້ອຍຄຳທີ່ ທ່ານກ່າວນັ້ນ ພວກຕູຕ້ອງຮີບຕອງໃຫ້ຖ່ອງແທ້ເສັຽກ່ອນ ເພາະ ເພິນວ່າຜູ້ໃດຈະເຮັດອັນໃດ ຕ້ອງຮີບຕອງໃຫ້ຖ້ວນຖີ່ ຖ້າຍັງບໍ່ໄດ້ ຮີບຕອງໃຫ້ຖ້ວນຖີ່ແລ້ວເຮັດ ຜູ້ນັ້ນຈະໄດ້ຮັບຄວາມທຸກເຖິງຕາຍ ດັ່ງດຽວກັບລີງບໍ່ພິຈາຣະນາໄປຖອດຫລັ້ມທີ່ຄົນຕອກຄາໄມ້ໄວ້ ສັນນັ້ນ"

໗ຖາມວ່າ ເຣື່ອງເປັນຢ່າງໃດ ?
ກົບຄິດຍາບ ເລົ່ານິຍາຍ

## ໙. ເຣື່ອງລິງຖອດຫລິ້ມ

ປາງກ່ອນ ມີເສດຖີຜູ້ນຶ່ງຊື່ສຸພະທັດ ຈັດສ້າງວິຫານຢູ່ໃກ້ປ່າຫັມນາອັນ ໃນປະເທດມະຄົດ ໄດ້ຈ້າງຊ່າງໄມ້ໄປຫາຕັດໄມ້ມາເຣັດວິຫານ ຊ່າງໄມ້ໄປຕັດໄມ້ຕົ້ນໄມ້ຕົ້ນນຶ່ງລົ້ມລົງແລ້ວກໍບັ້ນອອກເປັນທ່ອນ ໆ ໄມ້ທ່ອນນຶ່ງພໍຕັດຂາດແລ້ວກໍງັບເຂົ້າກັນ ນາຍຊ່າງຈຶ່ງເອົາຫລິ້ມຕອກຄາໄວ້ ຄັນໃກ້ຄ່ຳ ນາຍຊ່າງກໍກັບຄືນເມືອບ້ານ ຮຸ່ງເຊົ້າມາລິງທັງຫລາຍທີ່ຢູ່ໃນປ່ານັ້ນກໍພາກັນມາກິນ ລິງໂຕນຶ່ງໃນຈຳນວນນັ້ນ ໄດ້ມາເຫັນທ່ອນໄມ້ທີ່ນາຍຊ່າງຕັດຂາດແລ້ວເອົາຫລິ້ມຕອກໄວ້ ກໍຂຶ້ນໄປນັ່ງຫລິ້ມ ແລ້ວເອົາມືທັງສອງຈັບຫລິ້ມຄອນໄປມາ ເພື່ອຈະໃຫ້ຫລິ້ມຫລຸດອອກ; ຂນະນັ້ນອັນທະ (ຫຳ) ຂອງມັນຍ່ອນລົງໄປຢູ່ໃນລະຫວ່າງທ່ອນໄມ້ທັງສອງ ພໍຫລິ້ມຫລຸດໄມ້ກໍກຶບເຂົ້າກັນໜີບເອົາອັນທະແຕກຕາຍກັບບ່ອນ ເພາະສະນັ້ນເພິ່ນຈຶ່ງວ່າ

(໘) "ຄົນໃດພາກພຽນທຳໃນສິ່ງທີ່ບໍ່ຄວນທຳ ຄົນນັ້ນກໍຈະໄດ້ຮັບຄວາມຈິບຫາຍຈົນເຖິງຕາຍ ເໝືອນລິງພາກພຽນຖອດຫລິ້ມສັນນັ້ນ"

ດ້ວຍເຫດນີ້ເທວະດາຕົນຮັກສາໂລກ ຈຶງກ່າວຄຳໂສກສອງບົດນີ້ໄວ້ໃຫ້ລືຊາພາກົດວ່າ

ພານອນລິງແລ່ນເຕັ້ນ ໂຕນສັບ
ປຸບຫລົ້ນເລົ້າເລີຍຈັບ ຖອດໄງ້
ບໍ່ຄະນຶງວ່າໄມ້ຈະຫັບ ລິງໜີບ ຕົນແອ
ຫຳລອດລິງຫວ່າງໄມ້ ຫລົ້ນໜີບຕົນຕາຍ
ຄົນໃດຫລັກກື້ນລ້ຽວ ຕຶປອງ
ເຫລືອເພ່ງພິນຕາຕອງ ແຕ່ງໄວ້
ຄົນນັ້ນບ່ອນເຖິງຄອງ ນອນນຶງ ຕາຍແລ
ອັນນີ້ປຸບປຽບໃຫ້ ດັ້ງພ້ຽງພານອນ

ກົບຄຶດຍາວເລົ່ານິທານນີ້ສຸດແລ້ວ ຈຶງເວົ້າຊ້ຳອີກວ່າ ເຮືອງທັງມວນຕ້ອງພິຈາຣະນາດູໃຫ້ແຈ້ງແຈນກ່ອນແລ້ວຈຶງເຮັດ ບໍ່ດັ່ງນັ້ນກໍຈັກຈົນຫາຍຕາຍເສັຽເປົ່າ ເປັນດັ່ງລິງນັ້ນແລ

ງູໄດ້ຟັງຄຶດຍາວເລົ່ານິຍາຍມາດັ່ງນັ້ນ ຈຶງຖຽງວ່າ "ເຮີຍ ! ພວກກົບ ! ການທີ່ສູບໍ່ຍິນຍອມໃຫ້ກູລົງໄປກິນນ້ຳໃນບວກນີ້ ກໍຍ້ອນສູຄຶດວ່າ ຈະຮັກສາໂຕໄວ້ບໍ່ໃຫ້ຕາຍ ຊັ້ນບໍ້ ? ສູຄຶດວ່າຊິບໍ່ຕາຍເປັນຈັກເທື່ອບໍ້ ? ອັນທີ່ແທ້ ເມື່ອເຖິງຄາວຕາຍແລ້ວ ແມ່ນຈັກຮັກສາໄວ້ທໍ່ໃດກໍບໍ່ໝັ້ນດອກ ເພິ່ນຍັງວ່າ

ອາຍຸຂອງສັດໂລກນີ້ ຖ້າບໍ່ທັນເຖິງຄາດແມ່ນຊິຈົມລົງໃນທະເລ, ຕົກລົງຈາກພູເຂົາ, ຖືກອະສໍຣະພິດຮ້າຍຕອດ ຫລືຖືກສອນ

ແທງຕັ້ງ ໑໐໐ ບ່ອນກໍບໍ່ຕາຍ  ຖ້າເຖິງຄາດແລ້ວ ພຽງແຕ່ຫຍ້າຄາບາດກໍທົນຢູ່ບໍ່ໄດ້

ສິ່ງທີ່ກັມອຸປຖັມແລ້ວ  ບໍ່ຈຳເປັນຕ້ອງໃຫ້ຜູ້ໃດຊ່ອຍຮັກສາກໍສາມາດດຳລົງຢູ່ໄດ້  ສິ່ງທີ່ກັມທຳລາຍລ້າງແລ້ວ  ແມ່ນຈະຮັກສາປານໃດກໍພິນາດລົງຈົນໄດ້  ດັ່ງເຣື່ອງພຣະຍາວິສວາວະສຸຣາດ ສະນັ້ນ"

ກົບຖາມວ່າ  ເຣື່ອງເປັນຢ່າງໃດ

ງູ  ເລົ່ານິຍາຍ

## ໑໐. ເຣື່ອງພຣະຍາວິສວາວະສຸຣາດ

ປາງກ່ອນ  ມີເມືອງນຶ່ງຊື່ມາລະວະນະຄອນ  ຢູ່ໃນປະເທດສິນທຸວະສີ ທ້າວສິນທຸວະຣາດ ໄດ້ເປັນກະສັດສເວີຍຣາດໃນນະຄອນນັ້ນ  ພຣະອົງມີໂອຣົດສອງຊາຍ  ຜູ້ອ້າຍຊື່  ວິສວາວະສຸຣາດກຸມານ  ຜູ້ນ້ອງຊື່ນະທຸສຣາດ  ເມື່ອພຣະຣາຊບິດາສວັຣຄົດໄປແລ້ວ  ວິສວາວະສຸຣາດກໍໄດ້ເປັນກະສັດ  ແລ້ວພຣະອົງທົງຕັ້ງພຣະອະນຸຊານະທຸສຣາດໄວ້ໃນຕຳແໜ່ງມະຫາອຸປຣາດ  ຕໍ່ມານີ້ໝໍຢາຜູ້ນຶ່ງຊື່ສິດທິເວດມາຈາກຕ່າງປະເທດ  ເຂົ້າໄປເຝົ້າພຣະກະສັດວິສວາວະສຸຣາດ ທູນວ່າ "ມະຫາຣາດ ຂ້າພຣະບາດຮູ້ຢາສັກສິດຂນານນຶ່ງຊື່ສິດທິ ກິນແລ້ວບໍ່ຕາຍ  ຂ້າພຣະບາດຈັກທຳໃຫ້

ພຣະອົງສເວີຍ ເພື່ອໃຫ້ພຣະອົງໄດ້ມີພຣະຊົນຢູ່ຕລອດການ ແຕ່ຕ້ອງຫາເຄື່ອງປາໃຫ້ໄດ້ຄົບຖ້ວນຕາມກຳໜົດ ຈຶ່ງສັກສິດແທ້" ພຣະຣາຊາໄດ້ຫົງສະດັບກໍພໍພຣະທັຍ ເພາະປາກມີອາຍຸຍືນຍາວ ຈຶ່ງຕັດກັບໝໍວ່າ "ເອີດີແລ້ວ ທ່ານຈະຕ້ອງການສິ່ງໃດແດ່ມາຜະສົມປາ" ໝໍປາທູນວ່າ "ຖ້າພຣະອົງປະສົງແທ້ ກໍຂໍໃຫ້ຈັດສິ່ງເຫລົ່ານີ້ໃຫ້ຂ້າພຣະບາດ ຄື ນ້ຳນົມພັນ (ໄຫ) ນ້ຳທ່າ ໕ ຮ້ອຍ ນ້ຳຕານຍ້ອຍ ໕ ຮ້ອຍ ນ້ຳຕານປ່ງງ ໕ ຮ້ອຍ ນ້ຳມັນງາ ໕ ຮ້ອຍ ເຂົ້າສາລີທີ່ຂາວບໍຣິສຸດສອງຮ້ອຍ ກ້ວຍສຸກສອງຮ້ອຍ ຂນຸນສຸກ ໕ ຮ້ອຍ ເຄື່ອງອັນຈະຄວນຈົບມີຕົ້ນວ່າ ຫອມບົ່ວຖົ່ວງາແລະປາເຫດກໍດີ ພິກຂີງເກືອພ້ອມໝ້ງງໝາກ ໔ ຮ້ອຍ ພູສອງຮ້ອຍໃບແລະກິສບາຄູ່ເສບຈັບມັບນ້ຳດອກໄມ້ສອງພັນ ສົ້ມປ່ອຍຮ້ອຍຝັກ ນ້ຳອົບນ້ຳຫອມຮ້ອຍໄຫ ເສື້ອສາດອາສນາສອງຄູ່ ເສື່ອຜ້າຜືນໃໝ່ ໆ ໃຫ້ມີຢ່າງລະ ໖ ຄູ່ທຸກອັນ ແລ້ວໃຫ້ແປງກະຕຶບຫຼັງນຶ່ງນຸງແອ້ມໃຫ້ດີຢ່າໃຫ້ລົມແດດເຂົ້າໄດ້ ເອົາເຄື່ອງທັງມວນເຂົ້າໄປໄວ້ໃນຫັ້ນ ແລະໃຫ້ຜູ້ສາວງາມ ໆ ສອງຄົນເຂົ້າໄປບົວຣະບັດປັດກວາດທຸກວັນ ຄົນອື່ນຫ້າມເດັດຂາດ ມີແຕ່ຂ້າພຣະບາດກັບພຣະອົງທີ່ນັ້ນ ກົນບອນຢູ່ໃນທີ່ນັ້ນໄດ້ ເມື່ອເປັນດັ່ງນີ້ສິຣິສິດທີ່ກໍຈັກເກີດມີແກ່ພຣະອົງ ພຣະຣາຊາຫລົງເຊື່ອເພື່ອປາກມີອາຍຸຍືນນານ ກໍໃຫ້ຈັດການຕາມຄຳໝໍປາ ຕັ້ງແຕ່ພຣະຣາຊາເຂົ້າໄປຢູ່ໃນກະຕຶບແລະສເວີຍປານັ້ນກໍມີພຣະກາຍອ້ວນພີຫລາຍ ຈົນລຸກຍ່າງຍ້າຍໄປມາບໍ່ໄດ້ ພວກ

ເສນາອາມາດຣາຊບໍຣິວານ ບໍ່ເຫັນພຣະຣາຊາອອກມາຈາກກະຕຶບ ເປັນເວລາຕັ້ງເດືອນ ໆ ກໍພາກັນມ້າງກະຕຶບເຂົ້າໄປເບິງ ຈິງໄດ້ເຫັນພຣະຍານີອາການເປັນຢ່າງນັ້ນ ກໍເອົາອອກມາປິນປົວ ສ່ວນໝໍປາກໍເລີຍຖືກພວກອຳມາດຈັບຂ້າເສັຽ

ຕໍ່ມາ ເມື່ອພຣະຍາວິສວາວະສຸຣາດ ຫາຍຈາກພຍາດນີ້ ພຣະກາຍອ້ວນພີດີງາມແລ້ວ ວັນນຶ່ງພຣະອົງຈຶ່ງຊວນພຣະອະນຸຊາ ພ້ອມດ້ວຍເສນາໄພ່ພົນອອກໄປປະພາດປ່າຫາໄລ່ເນື້ອ ເມື່ອໄດ້ປ່າຍພານອ້ອມດອນໄວ້ແລ້ວ ພຣະຍາກັບເຈົ້າມະຫາອຸປຣາດຜູ້ນ້ອງກໍຂຶ້ນມ້າໄປລັດຢູ່ທາງນຶ່ງ ທັນໃດນັ້ນ ເມື່ອໄດ້ຍິນສຽງຄົນຮ້ອງໂຫ່ ກວາງໂຕນຶ່ງກໍແລ່ນອອກທາງພຣະຣາຊາ ພຣະອົງກັບພຣະອະນຸຊາຈຶ່ງຖີບມ້າໄລ່ກວາງໂຕນັ້ນໄປ ຈົນຫລົງທາງເຂົ້າໄປໃນດົງເລິກ ເມື່ອບໍ່ທັນກວາງແລ້ວ ຈຶ່ງຊວນກັນເຂົ້າພັກແຮງຢູ່ແຄມຫ້ວຍນອຍແຫ່ງນຶ່ງ ດ້ວຍຄວາມເມື່ອຍລ້າຫລາຍ ພຣະຍາວິສວາວະສຸຣາດກໍບັນທົມຫລັບໄປ ຄາວນັ້ນທ້າວນະທຸສຣາດຜູ້ອະນຸຊາ ມີຄວາມໂລພາໃນຣາຊສົມບັດ ພໍເຫັນພີ່ຊາຍນອນຫລັບ ຈຶ່ງຖອດດາບຟັນຄໍພີ່ຊາຍຂາດຕາຍກັບບ່ອນ

ໃນຂະນະນັ້ນເທວະດາທີ່ຢູ່ເທິງໄມ້ຕົ້ນນຶ່ງ ໄດ້ເຫັນນ້ອງຂ້າອ້າຍຕາຍຕໍ່ໜ້າດັ່ງນັ້ນ ຈຶ່ງສະແດງອາກັປປະກິຣິຍາ ໃຫ້ຕົ້ນໄມ້ຕົ້ນນັ້ນສັ່ນສະເທືອນເໝືອນດັ່ງມີຈິດໃຈ ທ້າວນະທຸສຣາດໄດ້ເຫັນອາການຂອງຕົ້ນໄມ້ສັ່ນສະເທືອນ ກໍມີຄວາມຫວາດສະດຸ້ງ ຈຶ່ງກ່າວກັບຕົ້ນໄມ້ຕົ້ນນັ້ນວ່າ

(໗) "ເຮີຍຕົ້ນໄມ້! ລົງຫລືຄືນ (ບໍ່ໄດ້ຈັບມຶງຊຸ່ນໃຫ້ເໜັງ) ເຫດໃດມຶງຈຶ່ງເໜັງຕີງ ຫລືວ່າມຶງເຫັນໂທດຂອງກູບໍ້ (ຖ້າດັ່ງນັ້ນ) ມຶງຢ່າກ່າວໂທດຂອງກູແກ່ຜູ້ໃດຜູ້ນຶ່ງເປັນອັນຂາດ"

ບະຫຸສຣາດກ່າວກັບຕົ້ນໄມ້ດັ່ງນີ້ແລ້ວ ກໍຂຶ້ນມ້າກັບຄືນມາໄດ້ພົບພວກເສນາອາມາດຢູ່ກາງທາງ ຈຶ່ງກ່າວລ່າຍພາງພວກອຳມາດວ່າ ພຣະຣາຊາຂອງເຮົາຖືກເສືອໂຄ່ງຄາບເອົາໄປກິນພ້ອມທັງມ້າ ໃນເວລາເຮົາທັງສອງຫຼົງປ່າຢູ່ໃນດົງເລິກ ດັ່ງນີ້ແລ້ວກໍພາໄພ່ພົນກັບຄືນພຣະນະຄອນ ຂຶ້ນສເວີຍຣາຊສົມບັດເປັນກະສັດແທນພີ່ຊາຍຂອງຕົນຕໍ່ມາ

ຢູ່ຕໍ່ມາ ມີຊ່າງໄມ້ຜູ້ນຶ່ງຢູ່ໃນເມືອງນາລະວະນັ້ນເອງ ໄດ້ໄປປ່າຫາຕັດໄມ້ມາເປງເຮືອນ ຈຶ່ງໄປເຫັນໄມ້ຕົ້ນທີ່ພຣະບາບະຫຸສຣາດສັ່ງໄວ້ນັ້ນລຳງາມດີ ກໍແບກຂວານເຂົ້າໄປຈະຕັດ ເທວະດາທີ່ສິງຢູ່ໃນຕົ້ນໄມ້ນັ້ນ ຈຶ່ງກ່າວຂຶ້ນວ່າ "ເຮີຍຊ່າງໄມ້ມຶງຢ່າຕັດຟັນກູໜາ! ເພາະວ່າພຣະຣາຊາຂອງມຶງໄດ້ຮູ້ຈັກກູດີ ກູກັບພຣະຣາຊາຂອງມຶງໄດ້ຜູກມິດສນິດສນົມກັນມາເທິງແລ້ວ ຖ້າມຶງຕັດຟັນກູ ມຶງຕ້ອງຈິບຫາຍແນ່" ຊ່າງໄມ້ໄດ້ຍິນດັ່ງນັ້ນກໍໜ້າຫລ່າ ມີຄວາມສະທ້ານປ້ານກົວເປັນອັນມາກ ແບກຂວານໄດ້ກໍຟ້າວປົບເມືອບ້ານ ແລະບໍ່ໄດ້ເວົ້າເຣື່ອງນີ້ໃຫ້ໃຜຟັງເລີຍ

ຢູ່ມາຄືນນຶ່ງ ຊ່າງໄມ້ເຂົ້ານອນນຳເມັຽ ມີຄວາມອໍຣະຊອນສະອອນໃຈໃນຮູບຮ່າງອັນງາມແງ່ຂອງເມັຽຕົນ ຈຶ່ງຫຼົງເວົ້າອອກເປັນສໂລກຄຳກອນດັ່ງນີ້

(໑໐) "ດູລານ້ອງຜູ້ເລົາຄິງສ້ວຍ ສວຍງາມປານຊ່ຽນ
ຕານາງໄຫຼເລື່ອນຍ້ອຍ ດຳປີ້ແປກນິນ
ຍາມນ້ອງບິວຣະບາດບ້າຍ ຄັກຄ່ຽນຄືຫິງ
ເປັນທີ່ຣຽມຣິມກະສັນ ຊື່ນມະໂນບໍ່ມີເອື້ອນ
ຄືດັ່ງຣຸກຂາໄມ້ ໃບໄພຕົ້ນນຶ່ງ
ໄດ້ຜູກພັນທະມິດໝັ້ນ ດອນເຈົ້າແຫ່ງເຮົາ ນັ້ນແລ້ວ"

ໃນຂນະທີ່ຊ່າງໄມ້ພວມສຳອອຍອ້ອຍອິ່ນຢູ່ກັບເມັຽດັ່ງນີ້ ພຣະຣາຊາບະຫຸສຣາດໄດ້ປອມໂຕອອກທ່ຽວໃນເວລາກາງຄືນ ເພື່ອຜິກຈອບຟັງຄຳເວົ້າຂອງຊາວພຣະນະຄອນ ທີ່ຈະເວົ້າຕິຕຽນຕິນ ຫລືຍ້ອງຍໍສໍຣະເສີນ ກໍພໍດີໄປເຖິງເຮືອນຊ່າງໄມ້ແລະໄດ້ຍິນຄຳຊ່າງໄມ້ເວົ້າດັ່ງນັ້ນ ກໍມີຄວາມກິນແໜງແຄງພຣະທັຍ ຈຶ່ງສະເດັດກັບຄືນເຂົ້າພຣະຣາຊວັງ

ຮຸ່ງເຊົ້າມາ ພຣະຣາຊາຈຶ່ງໃຫ້ນາຍນັກການໄປທັນຊ່າງໄມ້ມາເຝົ້າໃນທີ່ສງັດ ຕັດຖາມວ່າ "ນີ້ເຣີຍ! ຊ່າງໄມ້ ຄືນນີ້ເຈົ້າໄດ້ເວົ້າວ່າ ໄມ້ຕົ້ນນຶ່ງໃນປ່າໄດ້ຜູກຮັກກັບພຣະຣາຊາ ດັ່ງນີ້ ຄຳນີ້ເຈົ້າໄດ້ຍິນມາຈາກໃສ?"

ຊ່າງໄມ້ທູນວ່າ "ພຣະຣາຊອາຍາບໍ່ພົ້ນເກົ້າ ຂ້າພຣະບາດບໍ່ໄດ້ຍິນມາຈາກບຸກຄົນຜູ້ໃດຜູ້ນຶ່ງເລີຍ ແຕ່ໄດ້ຍິນຈາກຕົ້ນໄມ້ຕົ້ນນັ້ນເອງ" ພຣະຣາຊາຕັດຖາມຊ້ຳອີກວ່າ "ເປັນຈັ່ງໃດ? ເຈົ້າໄປເຮັດຈັ່ງໃດ ຕົ້ນໄມ້ນັ້ນຈຶ່ງເວົ້າຈັ່ງຊັ້ນ" ຊ່າງໄມ້ທູນວ່າ "ຂ້າແຕ່ມະຫາ

ธาດ ມີວັນນຶ່ງຂ້າພຣະບາດໄປຫາຕັດໄມ້ມາແປງເຮືອນ ພໍໄປເຖິງ ປ່າໃຫຍ່ໄດ້ເຫັນໄມ້ຕົ້ນນຶ່ງລຳຊື່ງາມດີ ຈຶ່ງແບກຂວານເຂົ້າໄປຈະຟັນ ໄມ້ຕົ້ນນັ້ນເລີຍເວົ້າຂຶ້ນວ່າ 'ເຮີຍຊ່າງໄມ້ ນຶ່ງຢ່າຕັດຢ່າຟັນກູໜາ! ຂ້ອນວ່າກູນີ້ກັບພຣະບາທະບຸສຣາດເຈົ້າບາຍຂອງມຶງໄດ້ຂອດຮັກຂອດ ແພງກັນ ຖ້າມຶງຕັດກູລົງເມື່ອໃດ ມຶງຕ້ອງຈິບຫາຍຕາຍໝົດ ຄົວເຮືອນ' ວ່າດັ່ງນີ້ ຂ້ານ້ອຍມີຄວາມສົງສັຍຈຶ່ງຖາມອອກໄປວ່າ ນີ້ນະຕົ້ນໄມ້ ເຈົ້າໄດ້ຜູກມິດສນິດສນົມກັບພຣະຣາຊາຂອງເຮົາແຕ່ເມື່ອ ໃດ ແລະດ້ວຍເຫດການນີທານເປັນຢ່າງໃດ ເຈົ້າຈຶ່ງໄດ້ຜູກຮັກ ແພງກັບພຣະຣາຊາຂອງເຮົາ ເມື່ອຂ້ານ້ອຍຖາມດັ່ງນີ້ ໄມ້ຕົ້ນນັ້ນ ກໍເລົ່າເຫດການທັງໝົດໃຫ້ຂ້ານ້ອຍຟັງ" ພຣະຣາຊາໄດ້ສະດັບຄຳ ຂອງຊ່າງໄມ້ດັ່ງນັ້ນ ກໍບໍ່ໄດ້ຕັດຄຳປະການໃດ ເປັນແຕ່ສັ່ງໃຫ້ຊ່າງ ກັບເມືອ ແລ້ວພຣະອົງຈຶ່ງມາດຳຣົງຣຳຣອນໃນພຣະທັຍວ່າ ໂຫດ ອັນກູກະທຳນີ້ ຄິດວ່າເປັນການລັບລີ້ບໍ່ມີຜູ້ໃດຮູ້ເຫັນນຳຄັກແນ່ ແຕ່ ບັດນີ້ຊ່າງໄມ້ກໍມາຮູ້ແລ້ວ ແລະເນັ່ງຂອງມັນກໍຮູ້ນຳອີກ ບໍ່ຊ້າ ຄວາມນີ້ກໍຈັກລືຊາຜາກົດໄປທົ່ວເມືອງເປັນແທ້ ພຣະອົງມີຄວາມ ຄັບແຄ້ນກິນແໜງ ຈຶ່ງເອົາດາບແຫງຄໍຕົນຕາຍໄປໃນວັນນັ້ນເອງ

ງູເລົ່ານິຍາຍອັນນີ້ໃຫ້ກົບທັງຫລາຍຟັງແລ້ວ ຈຶ່ງກ່າວອີກວ່າ "ນີ້ລະກົບທັງຫລາຍເອີຍ! ສູຄິດວ່າຈະຮັກສາຕົນໃຫ້ພົ້ນຈາກຄວາມ ຕາຍນັ້ນ ບໍ່ພົ້ນໄດ້ດອກ ຈັ່ງໃດສູກໍຕ້ອງຕາຍໃນມື້ນຶ່ງຈົນໄດ້ ດັ່ງ ດຽວກັບພຣະບາວິສວາວະສຸຣາດນັ້ນແລ

ອີກປະການນຶ່ງ ຄວາມໂລບມາກໂລພາ ແລະຄວາມຂີ້ຖີ່ ຫວງແຫນນີ້ແຫລະ ຈະພາໃຫ້ພວກສູຕ້ອງຕາຍລົງໄປໃນວັນນຶ່ງເປັນແທ້"

ເມື່ອນັ້ນນົກກົບໂຕນຶ່ງຊື່ ນະທັດຕັກຂີ ໄດ້ຍິນຄຳງູກ່າວດັ່ງນັ້ນ ຈຶ່ງເວົ້າກັບພວກກົບທັງຫລາຍວ່າ "ນີ້ແນ່ະ ພວກເຮົາທັງຫລາຍ! ພວກເຮົາຢ່າໄດ້ເຊື່ອຟັງຄຳງູເລີຍ ພວກເຮົາຈົ່ງພິຈາຣະນາດູໃຫ້ຮູ້ຮ້າຍດີຄັກແນ່ກ່ອນ ຖ້າເຮົາບໍ່ພິຈາຣະນາດູໃຫ້ຮູ້ຮ້າຍດີກ່ອນແລ້ວເຮັດລົງໄປພວກເຮົາກໍຈະໄດ້ຮັບຄວາມທຸກຮ້ອນໃນພາຍຫລັງ ດັ່ງດຽວກັບກັບນິຍາຍພຣະຍາທະຕະຣັດຖະນັ້ນເອງ"

ງູຖາມກົບນະທັດຕັກຂີ ວ່າ ນິຍາຍເຣື່ອງນັ້ນເປັນຈັ່ງໃດ?
ກົບນະທັດຕັກຂີ ເລົ່ານິຍາຍ

## ໑໑. ເຣື່ອງພຣະຍາທະຕະຣັຕຖະ

ປາງກ່ອນ ມີພຣະຍາອົງນຶ່ງຊື່ວ່າ ທະຕະຣັຕຖະ ສເວີຍຣາຊສົມບັດຢູ່ໃນນະຄອນອະໂຍທຍາ ພຣະກະສັດອົງນີ້ ມັກອອກໄປທ່ຽວປ່າຊອກຫາຍິງເນື້ອແຕ່ຜູ້ດຽວສເມີ ໆ ວັນນຶ່ງພຣະຍາສະເດັດອອກໄປຍິງເນື້ອ ໄປຕາມໄປຈົນເຖິງປ່າຫິມວັນອັນເປັນທີ່ຢູ່ຂອງພວກພຣະຣັດສີ ນະທີ່ນັ້ນ ເຈົ້າສຸວັນນະຣັດສີເປັນປະທານແຫ່ງພວກຣັດສີທັງຫລາຍ ພຣະຍາທະຕະຣັດຈຶ່ງເຂົ້າໄປໄຫວ້ພຣະຣັດສີ

ຖາມຂ່າວຄວາມສຸກທຸກວ່າ "ເຈົ້າກູມາຢູ່ໃນທີ່ນີ້ ຍັງມີຄວາມລຳບາກຍາກໃຈແນວໃດແນ່ ?" ພຣະສຸວັນນະຣັກສີຖວາຍພຣະພອນວ່າ "ດູລາມະຫາຣາດ! ເຮົາມາຢູ່ທີ່ນີ້ກໍບໍ່ມີຄວາມລຳບາກຍາກແຄ້ນແນວໃດ ແຕ່ມີຄວາມບໍ່ສະບາຍໃຈຢູ່ແນວນຶ່ງ ຄືໃນທີ່ນີ້ມີຊ້າງປ່າເປັນອັນມາກມັກມາຫລິ້ນນ້ຳໃນສະພັງ ອັນເປັນທີ່ອາສັຍອາບກິນຂອງພວກຮັກສີ ແລະຂີ້ເຮັ່ງຮວຍປາຍໄວ້ ທັງຫັກງ່າໄມ້ລົງໃສ່ຂວາງເຂດອາສົມໃຫ້ຮົກເຮື້ອ ເປັນທີ່ລຳຄານໃຈແຕ່ທີ່ນີ້ແລ້ວ" ພຣະຍາໄດ້ຟັງສະດັບຄຳຂອງພຣະຣັກສີດັ່ງນັ້ນແລ້ວ ກໍອຳລາພຣະຣັກສີໜີໄປ ເຖິງຍາມຄ່ຳພຣະຍາໄດ້ມາຝົກຈອບຍິງຊ້າງຢູ່ແຄມຝັ່ງສະນັ້ນຈົນເດິກ ກໍບໍ່ເຫັນຊ້າງມາຈຶ່ງນ້ອຍຫລັບໄປ

ເວລານັ້ນມີຣັກສີນ້ອຍຕົນນຶ່ງ ພໍ່ແມ່ທັງສອງຂອງທ່ານຕາບອດ ທ່ານຈຶ່ງອຸປຖາກພໍ່ແມ່ທັງສອງດ້ວຍການຕັກນ້ຳໃຫ້ອາບຫານນ້ຳໃຫ້ກິນບໍ່ຂາດ ໃນວັນນັ້ນພໍເດິກຂ້ອນແຈ້ງ ເຈົ້າຣັກສີນ້ອຍລຸກຂຶ້ນໄປຕັກນ້ຳໃນສະນັ້ນ ພຣະຍາທະຕະຣັດຖະຊວາດຮູ້ເນື້ອຂຶ້ນໄດ້ຍິນສຽງເຈົ້າຣັກສີ ບໍ່ທັນພິຈາຣະນາໃຫ້ຖີ່ຖ້ວນ ເຂົ້າໃຈວ່າແມ່ນຊ້າງລົງໄປຫລິ້ນນ້ຳໃນສະ ຈຶ່ງກົງສອນຍິງໄປຖືກເຈົ້າຣັກສີນັ້ນຕາຍ ພາຍລຸນມາ ພຣະຍາມີຄວາມກິນແໜງໃຈເປັນອັນມາກລວດໂສກເສົ້າຫງ່ວມເຫງົາຕາຍໄປ ຍ້ອນຄວາມເສັງໃຈໃນການທີ່ຕົນບໍ່ພິຈາຣະນານັ້ນເອງ .

ກິນນະຫັດຕັກຂີ ເວົ້າມີຍາຍສຸດແລ້ວ ຈຶ່ງກ່າວເຕືອນກົບທັງຫລາຍອີກວ່າ "ນີ້ລະຊາວເຮົາທັງຫລາຍ ຈົ່ງຮົ່ນຕອງໃຫ້ດີ ຖ້າ

ພວກເຮົາບໍ່ພິຈາຣະນາໃຫ້ແຈ້ງແຈບກ່ອນ ແລະປະໃຫ້ງູໂຕນັ້ນລົງມາເຖິງທີ່ຢູ່ຂອງເຮົາໄດ້ ເຮົາກໍຈະຈິບຫາຍຕາຍໄປດັ່ງພຣະຍາທະຕະຣັດຖະນັ້ນເອງ"

ງູໄດ້ຍິນກົບມະຫັດຕັກຂິເລົ່ານິຍາຍມາດັ່ງນັ້ນ ກໍແຮ່ງຊ້ຳສະແດງອາການເມື່ອຍລ້າເຂົ້າຫລາຍ ແລ້ວຈຶ່ງໄຫວ້ວອນພຣະຍາມັນທຸກະຣາດວ່າ "ຂ້າແຕ່ທ່ານພຣະຍາກົບຜູ້ມະຫາຕະມະ ເມື່ອຂ້າພຣະເຈົ້າຍັງຢູ່ໃນປ່າໃກ້ນະຄອນອຸດເຊນີ ໄດ້ຍິນພວກນົກໜູປູປາທັງຫລາຍຍ້ອງຍໍສັຣະເສີນທ່ານຢູ່ສເມີ ໆ ວ່າເປັນຜູ້ໃຈບຸນ ມີເມດຕາປານີ ມັກຊ່ອຍເຫລືອເຈືອຈານແກ່ຜູ້ທຸກໄຮ້ອະນາຖາ ບັດນີ້ຂ້າພະເຈົ້າເປັນຜູ້ອະນາຖາຫາທີ່ເພິ່ງບໍ່ໄດ້ ຈຶ່ງໄດ້ກົ້ມໜ້າເຂົ້າມາຂໍອາສັຍ ເຫດສັນໃດທ່ານຈຶ່ງບໍ່ເມດຕາຂ້າເຈົ້າ ເພິນຍັງວ່າ

ຜູ້ເປັນເຈົ້າຂອງເຮືອນ ຄວນສະແດງຄວາມມີໃຈແຜ່ຜາຍຕ້ອນຮັບແຂກ ເຖິງວ່າແຂກນັ້ນຈະເຄີຍເປັນສັດຕູກໍຕາມ, ຕົ້ນພຶກສາໃຫ້ຄົນຜູ້ມາຕັດຟັນຊົ້ນຮົ່ມເງົາຂອງຕົນໄດ້

ຜູ້ມີຈັນຍາດີ ຍ່ອມມີຄວາມກະຣຸນາຕໍ່ບຸກຄົນທຸກຊັ້ນ ຫລືວ່າພຣະຈັນຊິບໍ່ສ່ອງແສງເຂົ້າໄປໃນເຮືອນຂອງຄົນຊົ່ວຊັ້ນບໍ ?

ເຮືອນໃດ ໃຫ້ແຂກໄດ້ລົງເຮືອນໜີດ້ວຍຄວາມເສັຽໃຈ ກໍເມ່ນໃຫ້ແຂກປະຄວາມອະວະມຸງຄຸນໄວ້ໃຫ້ເຈົ້າຂອງເຮືອນ ແລະຫອບເອົາຄວາມສິຣິມຸງຄຸນໄປໝົດຈ້ອຍ

ເພາະສະນັ້ນ ຖ້າຄຶດຕາມນີ້ແລ້ວ ກໍຂໍທ່ານຈົ່ງໄດ້ເມດຕາ

ຂ້າພະເຈົ້າ ແລະຂ້າພະເຈົ້າກໍໄດ້ເມື່ອຍລ້າເຕັມທີໃກ້ຊິຕາຍຢູ່ແລ້ວ ວ່າແລ້ວງູກໍພີຕີສະແດງອາການອິດອ່ອນເຕັມທີເໝືອນດັ່ງຈະຕາຍ

ພຣະຍາກົບໄດ້ຟັງຄຳງູໄຫວ້ວອນ ແລະເຫັນອາການຂອງງູ ເປັນດັ່ງນັ້ນ ກໍມີຄວາມອີດູ ຈຶ່ງເວົ້າກັບພວກກົບທັງຫລາຍອີກວ່າ "ນີ້! ດູລາຊາວເຮົາທັງຫລາຍ ງູໂຕນີ້ມີພຍາ ມາກ່າວຈານິຍາຍ ຫລາຍປະການ ເປັນໜ້າສົງສານແທ້ດີຫລີ ອີກປະການນຶ່ງເບິງ ທ່າທີກິຣິຍາມາຣະຍາດ ກໍສົມເປັນນັກປາດຜູ້ສລາດມີສິນເປັນອັນດີ ສົມຄວນທີ່ພວກເຮົາຈະອະນຸຍາດໃຫ້ມັນລົງມາກິນນ້ຳໄດ້"

ທັນໃດນັ້ນກົບໂຕນຶ່ງຊື່ ພະຫຸສູດ ຈຶ່ງກ່າວຕອບຄຳພຣະຍາ ກົບວ່າ "ຂ້າແຕ່ມະຫາຣາດ! ງູໂຕນີ້ມາສຳແດງກິຣິຍາມາຣະຍາດ ເປັນຜູ້ດີມີສິນທັມ ແລະກະທຳອາການເມື່ອຍລ້າ ອັນນີ້ເປັນອາການ ອັນຜິດປະຫລາດພົ້ນວິສັຍ ແລະຖ້າພວກເຮົາຫາກຕາຍໃຈຫລົງ ເຊື່ອຄຳນັ້ນ ພວກເຮົາກໍຈະຈິບຫາຍເສັຽ ເພາະຄວາມຜິດຂອງ ເຮົາເອງ ດັ່ງດຽວກັບນິຍາຍຂອງພວກເຂົາ ໑໐ ຄົນ ແຕ່ປາງກ່ອນ ຄື ແພະ ໖ ໂຕ ໝາຈອກໂຕ ໑ ພານໄລບລ່າຍຜູ້ ໑ ຊາຍໃຈບຜູ້ ໑ ເມັຽຊ່າງຫູກ ໑ ເມັຽຊ່າງຕັດຜົມ ໑ ນາງພານຜູ້ບໍ່ເບິ່ງໜ້າຜູ້ຊາຍ ຈັກເຫື້ອ ໑ ແມວ ໑ ນິກຍາງ ໑ ເຂົາ ໑໐ ຈຳພວກນີ້ ຍ່ອມກະທຳ ອາການອັນປະຫລາດ ຜິດຮີດຄອງແລ້ວເລີຍໄດ້ຮັບຄວາມຈິບຫາຍຕາຍ ໄປ ຍ້ອນການກະທຳຂອງຕົນເອງ"

ພຣະຍາກໍຖາມວ່າ ເຣື່ອງເປັນຈັ່ງໃດ

ກໍບພະທຸສູດ ເລົ່າບິຍາຍ

## ໑໒. ເຣື່ອງຍັນຍະພານ

ແຕ່ປາງກ່ອນ ມີພານຜູ້ນຶ່ງຊື່ ຍັນຍະບຸຣຸດ ຢູ່ໃນເມືອງສິວະນະຄອນ ພານຜູ້ນັ້ນຕັ້ງໃຈໄວ້ວ່າຈະຊອກຫາເອົາຍິງຜູ້ບໍຣິສຸດ ທີ່ບໍ່ເຄີຍເວົ້າຈາຕ້ານກັບຜູ້ຊາຍ ຫລືເບິ່ງໜ້າຜູ້ຊາຍເລີຍມາເປັນເມັຽ ປາງນັ້ນມີນາງພານນີ້ຜູ້ນຶ່ງ ເປັນລູກສາວຊາວບ້ານທີ່ຢູ່ທາງທິດເໜືອເມືອງສິວະນະຄອນນັ້ນເອງ ນາງພານນີ້ຄັນນັ້ນ ຄັນເຫັນຜູ້ຊາຍກາຍມາໃກ້ ກໍເອົາຜ້າບັງໜ້າເສັຽ ບໍ່ຜໍໜ້າເບິ່ງຜູ້ຊາຍຈັກເທື່ອ ວັນນຶ່ງຍັນຍະພານທ່ຽວໄປໃນບ້ານນັ້ນ ໄດ້ເຫັນນາງພານນີ້ສະແດງກິຣິຍາອາການເອົາຜ້າບັງໜ້າດັ່ງນັ້ນ ກໍໃສ່ໃຈວ່າເປັນຍິງດີມີຄວາມບໍຣິສຸດ ຈຶ່ງຂໍໂອນເອົາມາເປັນເມັຽແລະຢູ່ກິນນຳກັນມາຈົນໄດ້ລູກຊາຍຜູ້ນຶ່ງ ນາງພານນີ້ຜູ້ນີ້ ຕັ້ງແຕ່ໄດ້ຜົວມາກໍບໍ່ຫລຽວເບິ່ງໜ້າຊາຍອື່ນເລີຍນອກຈາກໜ້າຜົວຂອງຕົນ ຈົນທີ່ສຸດແຕ່ໜ້າລູກຊາຍຂອງຕົນນາງກໍບໍ່ຫລຽວເບິ່ງ ເວລາເອົາລູກກິນນົມ ນາງກໍເອົາຜ້າບັງໜ້າຂອງຕົນໄວ້ ພານຜູ້ເປັນຜົວເຫັນອາການຂອງນາງເປັນດັ່ງນັ້ນກໍຄະນຶງໃນໃຈວ່າ ນາງພານນີ້ຜູ້ນີ້ ສະແດງກິຣິຍາມາຣະຍາດເປັນຜູ້ບໍຣິສຸດດີລົ້ນລົ້ນພົ້ນປະມານດັ່ງນີ້ ຄົງມີເຫດຢ່າງໃດຢ່າງນຶ່ງເປັນແນ່ແທ້ ເພາະເພິ່ນວ່າ

(໑໑) "ການສະແດງກິຣິຍານາຣະຍາດດີພົ້ນປະມານ ໑, ການສະແດງກິຣິຍານາຣະຍາດຮ້າຍເກີນປະມານ ໑, ການຕິຕຽນເກີນປະມານ ໑, ການຍ້ອງຍໍເກີນປະມານ ໑, ການເຮັດສະອາດພົ້ນປະມານ ໑, ການສະແດງຄວາມເສົ້າໂສກພົ້ນປະມານ ໑ ທັງ ປະການນີ້ເປັນລັກສນະຂອງຄົນຊົ່ວ"

ວັນນຶ່ງຍັນຍະພານຄິດຈະລອງເບິ່ງລັກສນະອາການຂອງເມັງຕົນ ຈຶ່ງບອກວ່າ "ນີ້ນະນາງວັນນີ້ຂ້ອຍນຶ່ງຈະໄປເບິ່ງກິຈການຄ້າທີ່ເມືອງໄກປະມານຈັກສາມສີ່ວັນຈຶ່ງຈະໄດ້ກັບມາ ດັ່ງນັ້ນເຈົ້າຈົ່ງຢູ່ເຝົ້າເຮືອນຮັກສາເຂົ້າຂອງແລະລູກໃຫ້ດີ" ວ່າແລ້ວພານກໍແຕ່ງເອົາຖົງລົງເຮືອນໄປ ເຖິງເວລາຄໍ່າຈຶ່ງລອບເຂົ້າມາຈອບຢູ່ກ້ອງລ່າງເພື່ອສັງຊອມເບິ່ງອາການຂອງເມັງ ສ່ວນນາງເມັງໃສ່ວ່າຜົວໜີໄປຄ້າເມືອງໄກແທ້ ຄັນຄໍ່າມາຈຶ່ງນັດໃຫ້ຊາຍຊູ້ມານອນນໍາ ສນຸກເກືອກກົ້ວນົວເນົາຢູ່ນໍາກັນຕລອດຄືນ ຍັນຍະພານໄດ້ເຫັນເຫດການອັນນັ້ນດ້ວຍຕາຕົນເອງຢ່າງຄັກແນ່ ກໍເກີດຄວາມເບື່ອໜ່າຍ ຮໍ່າເພິງວ່າ ຄໍາທີ່ນັກປາດເຈົ້າກ່າວວ່າ "ການສະແດງກິຣິຍານາຣະ-ຍາດດີພົ້ນປະມານ ຯລຯ ເປັນລັກສນະຂອງຄົນຊົ່ວຮ້າຍ ນີ້ມາແນ່ນແທ້" ຮໍ່າເພິງດັ່ງນີ້ແລ້ວ ກໍໜີໄປນອນຢູ່ບ່ອນອື່ນ ຕື່ນເຊົ້າມາຈຶ່ງກັບມາເຮືອນຂອງຕົນ ຮຽກຍາດພີ່ນ້ອງທັງຫລາຍມາປະຊຸມຈາຣະໄນເຫດການທີ່ນາງພານໄດ້ປະພຶດມາໃຫ້ຍາດພີ່ນ້ອງຟັງຢ່າງລະອຽດແລ້ວ ກໍຂັບໄລ່ນາງພານນັ້ນໜີຈາກເຮືອນໄປ ດັ່ງນັ້ນເທວະດາຕົນຮັກສາໂລກ ຈຶ່ງກ່າວໂສກ ໒ ບົດນີ້ໄວ້ໃຫ້ລືຊາວ່າ

(໑) ບາງພານກະທຳເພດພົນ　　ນາບາ
ເຫັນລູກຊາຍຜ້າບັງຕາ　　ປົກໄວ້
ກະທຳກິນບໍ່ຄອຍໜ້າ　　ຊາຍໃດ ສັກເທ່ງ
ລັກລອບຊົມຊູ້ໄດ້　　ດັ້ງພ້ຽງ ຄຳຮາງ
(໒) ທ່ານພານຕີຕົບໜ້າ　　ຕາເສັງ
ນຶງຢ່າມາເປັນເມັງ　　ແບບເນື້ອ
ໜີຈາກເຮືອນກູເບັ້ງະ　　ຈົງຟ້າວ
ຢ່າໄດ້ມາຢູ່ເຜື່ອ　　ແຜງໃກ້ ຮ່ວມກູ

ສ່ວນຍັນຍະພານ ມັນຮ່ຳເພິງໃນໃຈອີກວ່າ "ກູໄດ້ມາເກືອກກົ້ວຢູ່ກິນນຳຍິງຜູ້ຫາສິນບໍ່ໄດ້ດັ່ງນີ້ ເປັນການບາບໜາສາໂຫດຫຼາຍ ດັ່ງນັ້ນກູຈະຕ້ອງໜີໄປເມືອງພາຣານະສີ ທຳການອາບນ້ຳຊຳຣະກາຍລ້າງບາບກ່ອນ ຄຶດແລ້ວ ມັນກໍຝາກເຮືອນຊານບ້ານຊ່ອງໄວ້ກັບຍາດພີ່ນ້ອງ ສ່ວນຕົນກໍອອກເດີນທາງຈະໄປເມືອງພາຣານະສີເພື່ອລ້າງບາບ ພໍໄປເຖິງປ່າແຫ່ງນຶ່ງກໍເຫັນແພະສອງໂຕຊົນກັນ ແລະມີໝາຈອກໂຕນຶ່ງຢືນຈອບເບິ່ງຢູ່ ດ້ວຍຄວາມຄະນຶງໃນໃຈວ່າ "ເອີ! ນີ້ນີ້ກູຕ້ອງໄດ້ກິນຊາກແພະໂຕໃດໂຕນຶ່ງແນ່ນອນ" ໃນຂນະທີ່ໝາຈອກຢືນຄະນຶງຢູ່ດັ່ງນີ້ ແພະສອງໂຕນັ້ນກໍທະຍານເຂົ້າຊົນກັນເຫີດແຮງ ຈົນໜ້າຜາກຂອງແພະໂຕນຶ່ງແຕກເລືອດໄຫຼອອກຊຶດ ໆ ໝາຈອກອົດທົນຄວາມຢາກໄວ້ບໍ່ໄດ້ ຈຶ່ງແລ່ນເຂົ້າໄປເລັຽກິນເລືອດທີ່ໜ້າຜາກຂອງແພະ ທັນໃດນັ້ນແພະກໍໂດດເຂົ້າຊົນກັນ

ແຕ່ເອົາໝາຈອກຈົບແປຕາຍລົງກັບບ່ອນ ດັ່ງນັ້ນນັກປາດພົບຈຶ່ງສອນໄວ້ວ່າ

(໑໖) "ໝາຈອກ ເຖິງຄວາມພິບາດຈິບຫາຍ ກໍຍ້ອນຄວາມຜິດກັນຂອງແພະ ດັ່ງນັ້ນຜູ້ມີຜຍາຄວນຫລີກເວັ້ນສິ່ງທີ່ຕາເຫັນ (ເຫັນເຂົາຜິດກັນ) ໃຫ້ໄກ"

ບັນຍະພານໄດ້ເຫັນເຫດການນັ້ນແລ້ວ ມີຄວາມສັງເວດໃນເປັນອັນມາກ ກໍກົ້ມໜ້າເດີນທາງຕໍ່ໄປຈົນເຖິງເມືອງມັຄຄະບຸຣີ ທີ່ນະຄອນນີ້ ພຣະກະສັດຜູ້ຄອງນະຄອນເປັນຄົນໃຈບຸນມັກໃຫ້ທານແກ່ສະມະນະພາມບໍ່ຂາດ ບັນຍະພານໄດ້ຊາບປວັດເຫດອັນນັ້ນແລ້ວ ກໍເຂົ້າໄປກ່າວຄຳໂອຍພອນຖວາຍພຣະຣາຊາຈົນເປັນທີ່ພໍພຣະທັຍ ພຣະຣາຊາຈຶ່ງພຣະຣາຊທານຄຳໃຫ້ພັນນຶ່ງ ບັນຍະພານເອົາຄຳພັນນັ້ນຕີເປັນຫລົ້ມສຽບເຂົ້າໄວ້ໃນໂກນໄມ້ເທົ້າທີ່ຕົນຖື

ໃນຄາວນັ້ນມີຊາຍນັກເລງຄົນນຶ່ງຊື່ ທຸສວາມີ ໄດ້ມາເຫັນບັນຍະພານ ທຸສວາມີຄິດໃນໃຈວ່າ ທັມມະດາພານຕ້ອງມີສິ່ງຂອງທີ່ມີຄ່າຢ່າງໃດຢ່າງນຶ່ງຕິດໂຕສເມີ ສະນັ້ນເຮົາຕ້ອງຫາອຸບາຍຈອບລັກເອົາຂອງພານນີ້ໃຫ້ໄດ້ ຄິດແລ້ວທຸສວາມີກໍປອມແປງໂຕເປັນດັ່ງພານຜູ້ມີສີລາຈາຣະວັດເປັນອັນດີ ແລ້ວໄປນອນຢູ່ໃຕ້ຕົ້ນໄມໃກ້ ໆ ທົນທາງທີ່ບັນຍະພານຈະກາຍໄປ ພໍເຫັນບັນຍະພານເດີນມາໃກ້ຕົ້ນໄຣ ທຸສວາມີກໍທຳອາການເປັນດັ່ງເຈັບທ້ອງນອນຄາງຢູ່ ບັນຍະພານເຫັນຈຶ່ງເຂົ້າໄປຖາມວ່າ "ເຮີຍ! ທ່ານພານ ທ່ານເປັນ

ຫຍັງຈຶ່ງມານອນກິ້ງເກືອກຢູ່ນີ້" ທຸສວາມີຕອບວ່າ "ຂ້າແຕ່ທ່ານຜູ້ໃຈບຸນ ຂ້າເຈົ້າເຈັບທ້ອງຫລາຍ ຂໍທ່ານຈົ່ງກະລຸນາປິ່ນປົວເອົາຂ້າເຈົ້າໄວ້ແດ່" ບັນຍະພານກ່າວວ່າ "ອື! ຂ້າພະເຈົ້າມີການຮ້ອນຫລາຍ ຈະຟ້າວໄປເມືອງພາຣານະສີເພື່ອທຳການລ້າງບາບ ຈະຢູ່ປິ່ນປົວທ່ານບໍ່ໄດ້ດອກ" ທຸສວາມີໄຫວ້ວອນວ່າ "ຂໍທ່ານຈົ່ງໂຜດ! ຂ້າເຈົ້າກໍຈະໄປເມືອງພາຣານະສີເພື່ອລ້າງບາບຄືກັນ ຖ້າທ່ານຫາກປິ່ນປົວຂ້າພະເຈົ້າດີແລ້ວ ຂ້າເຈົ້າກໍຈະໄດ້ເປັນໝູ່ເດີນທາງ ແລະຮັບໃຊ້ທ່ານໄປນຳທາງດ້ວຍ" ບັນຍະພານຫລົງເຊື່ອ ຈຶ່ງກ່າວວ່າ "ເອີ! ຈັ້ງຊັ້ນກໍດີຄືກັນ ແຕ່ວ່າຂ້າເຈົ້າຍັງບໍ່ຮູ້ຊື່ຂອງທ່ານ ຊ ວ່າຈັ້ງໃດ ເພື່ອໄປນຳທາງຈະໄດ້ຮ້ອງຮຽກກັນໃຫ້ຖືກ" ທຸສວາມີຕົວະວ່າ "ຂ້າເຈົ້າຊື່ ຊີວະພຸຕຕິ" ບັນຍະພານກໍທຳການປິ່ນປົວບີບຄັ້ນ ຊີວະພຸຕຕິທຳອຸບາຍພິດີຫາຍຈາກພຍາດນັ້ນ ແລ້ວທັງສອງກໍເດີນທາງຕໍ່ໄປຈົນເຖິງເວລາຄ່ຳ ຈຶ່ງໄປເຖິງບ້ານນຶ່ງ ແລ້ວທັງສອງກໍເຂົ້າໄປຂໍນອນກອງເຟືອງ ທີ່ເຂົາກອງໄວ້ແຄມເດີນບ້ານ ຕລອດເວລາເດີນທາງຈົນຮອດເວລາໄປນອນຢູ່ທີ່ກອງເຟືອງ ຊີວະພຸຕຕິ ໄດ້ສັງເກດເຫັນວ່າ ບັນຍະພານຫວງແຫນໄມ້ເທົ້ານັ້ນຫລາຍ ຄືບໍ່ວາງຈັກເທື່ອ ມັນຈຶ່ງໃສ່ໃຈໄວ້ວ່າ "ໃນໄມ້ເທົ້ານັ້ນຕ້ອງມີຂອງດີແນ່"

ຮຸ່ງເຊົ້າມາທັງສອງຄົນກໍອອກຈາກບ້ານນັ້ນ ສ່ວນອ້າຍຊີວະພຸຕຕິເມື່ອລຸກຂຶ້ນຈາກກອງເຟືອງ ມັນໄດ້ເອົາເຟືອງເສັ້ນນຶ່ງເຫນັບຕິດເກົ້າຜົມມາ ແລ້ວທັງສອງຄົນກໍເດີນທາງຕໍ່ໄປຈົນເຖິງ

ແມ່ນ້ຳແຫ່ງນັ້ງ ຊີວະພຸຕຕິຈຶ່ງທຳທ່າຕົກໃຈຮ້ອງຂຶ້ນວ່າ "ໂຫ! ບໍ່ໄດ້ແລ້ວ ທ່ານ!" ບັນທະພານງວາກໜ້າມາຖາມ "ແມ່ນຫຍັງ ກັນ?" ຊີວະພຸຕຕິດຶງເອົາເສັ້ນເຟືອງອອກຈາກເກົ້າຜົມ ເດໃຫ້ ບັນທະພານເບິ່ງພ້ອມກັບເວົ້າວ່າ "ນີ້ເດ ທ່ານ! ເວລາເຮົານອນຢູ່ ກອງເຟືອງນັ້ນຄືນນັ້ນນັ້ນ ບາດລຸກມາຂ້າພະເຈົ້າບໍ່ໄດ້ພິຈາລະນາໃຫ້ ຖ້ວນຖີ່ ເຟືອງເສັ້ນນີ້ໄດ້ຕິດມານຳເກົ້າຂອງຂ້າເຈົ້າ ເປັນການຜິດ ສິນບໍ່ສົມຄວນແທ້ ເພາະຂ້າເຈົ້າໄດ້ຕັ້ງສັດປັດຕິຍານໄວ້ດັກແນ່ແລ້ວ ວ່າ ຂຶ້ນຊື່ວ່າສິ່ງຂອງ ໆ ດີນອັນທີ່ເຈົ້າຂອງເຂົາບໍ່ອະນຸຍາດໃຫ້ແລ້ວ ແມ່ນແຕ່ຫຍ້າເສັ້ນນຶ່ງຂ້າພະເຈົ້າກໍບໍ່ເອົາ ນີ້ຕ້ອງເອົາເຟືອງຄືນໄປ ສົ່ງເຂົາກ່ອນ" ບັນທະພານຕອບວ່າ "ເຮີຍ! ເຟືອງດ້ານເສັ້ນ ນັ້ນຊິພໍເປັນຫຍັງ? ອີກປະການນຶ່ງທ່ານກໍບໍ່ໄດ້ໃສ່ໃຈລັກ ມັນຊິ ມີໂທດແນວໃດ?" ຊີວະພຸຕຕິກ່າວວ່າ "ບໍ່ດີດອກທ່ານ ຂ້າເຈົ້າ ບໍ່ເຄີຍເອົາຂອງຜູ້ໃດໂດຍເຈົ້າຂອງບໍ່ໄດ້ໃຫ້ຈັກເທື່ອ ຈຳເປັນຕ້ອງ ເອົາຄືນໄປສົ່ງເຂົາໃຫ້ໄດ້ ບໍ່ດັ່ງນັ້ນຂ້າພະເຈົ້າຈະມີໂທດໃນຖານ ອະທິນນາທານ ສະນັ້ນຂໍທ່ານຈົ່ງຄອຍຖ້າຂ້າພະເຈົ້າຈັກໜ່ອຍ ກ່ອນ" ບັນທະພານຕອບວ່າ "ເອີ! ເຮົາຈະຄອຍຢ່າງຖ້າໄປຊ້າໆ" ວ່າແລ້ວ ຊີວະພຸຕຕິກໍຖືເອົາເຟືອງເສັ້ນນັ້ນແລ່ນກັບຄືນ ພໍເຖິງປ່າ ບ່ອນລັບບັງກໍເອົາເຟືອງຖິ້ມເສຍ ແລ້ວນັ່ງຫລົບຢູ່ເທິງເຕີບປະມານ ພໍໄປຮອດບ້ານ ຈຶ່ງລຸກຂຶ້ນຍ່າງກັບຄືນມາຕາມທາງເກົ່າ ສ່ວນ ບັນທະພານຍ່າງຫຼົບຖ້າຊີວະພຸຕຕິໄປກ່ອນ ກໍໄປຮອດໜອງນ້ຳ

ໜອງນຶ່ງ ທີ່ໜອງນັ້ນມີນົກຍາງເຖົ້າໂຕນຶ່ງທຳອາການເປັນຜູ້ມີສິນ
ບໍ່ກິນປາ ຢືນເທສນາສອນພວກປາທັງຫລາຍຢູ່ ພວກປາພາ
ກັນຫຼົງເຊື່ອກໍພາກັນລອຍໄປໃກ້ ໆ ນົກຍາງ ລາງໂຕກໍລອດໄປ
ຕາມຫວ່າງຂາ ເທິງມາເມື່ອປາຕາຍໃຈແລ້ວ ນົກຍາງກໍຄ່ອຍ
ສວບກິນປາໂຕທີ່ໄປລຸບໝູ່ສເມີ ຍັນຍະພານໄດ້ເຫັນອາການຂອງ
ນົກຍາງດັ່ງນັ້ນກໍຄຶດໜ້າໜ່າຍ ຄະນຶງໃນໃຈວ່າ "ອື! ນົກຍາງ
ໂຕນີ້ມີມາຍາສລັບກັບກອກແທ້" ຄຶດແລ້ວກໍເດີນຕໍ່ໄປເຖິງປ່ານຶ່ງ
ພານໄດ້ເຫັນແມວໂຕນຶ່ງທຳເພດເປັນດັ່ງມີສີລາຈາຣະວັດອັນດີ ຢືນ
ເທສນາສອນພວກໜູທັງຫລາຍຢູ່ ພວກໜູທັງຫລາຍຟັງທັມຄຳ
ສອນຂອງແມວນັ້ນແລ້ວ ກໍເລີກກັບເມືອ ໜູໂຕໃດໄປລຸບຫລັງໝ
ກໍ່ຖືກແມວຄຸບເອົາໄປກິນເສັຽ ພານເຫັນອາການຂອງແມວເປັນດັ່ງ
ນັ້ນກໍຄຶດສັງເວດ ຄະນຶງໃນໃຈວ່າ "ໂອ້ໂຫ! ແມວໂຕນີ້ກໍອາທັມ
ບໍ່ປອກ" ຄຶດແລ້ວກໍເດີນທາງຕໍ່ໄປຈົນຄ່ຳ ຈຶ່ງໄປເຖິງບ້ານນຶ່ງ
ຍັນຍະພານເຂົ້າໄປພັກຂາຈານຂໍອາຫານໃນບ້ານນັ້ນ ກິນແລ້ວກໍ
ອອກມານອນຢູ່ຕູບນ້ອຍແຄມຜັກຕູບ້ານຫັ້ນ ເວລານັ້ນຊີວະພຸດຕິ
ກໍມາເຖິງ ມັນກະທຳອາການເມື່ອຍລ້າອິດຫິວຫລາຍລົ້ມນອນລົງຕໍ່
ໜ້າຍັນຍະພານພ້ອມກັບສຽງຄາງເໝືອນດັ່ງໃຈຈະຂາດ ຍັນຍະ
ພານເຫັນດັ່ງນັ້ນກໍສົງສານ ຟ້າວໂຊມມັນລຸກຂຶ້ນຖາມວ່າ "ທ່ານ
ໄດ້ກິນເຂົ້າແລ້ວຫລືຍັງ?" ຊີວະພຸດຕິ "ໂອ໋ຍ! ຕາຍ! ຕາຍ!
ຍັງບໍ່ໄດ້ກິນຈັກຄຳເລີຍທ່ານ" ຍັນຍະພານ "ອ້າວ! ຈັ່ງຊັ້ນຈົ່ງ

ເຂົ້າໄປຂໍກິນໃນບ້ານນີ້ເສັຽ" ຊີວະພຸຕຕິຕອບວ່າ "ໂອີຍ! ໄປບໍ່ໄດ້ດອກ ເພາະວ່າໝາບ້ານນີ້ຮ້າຍແທ້ ໆ"

ບັນບະພານຄິດໃນໃຈວ່າ "ໝໍນີ້ເປັນຄົນດີມີສິນທັມແທ້ ແຕ່ເຟືອງເສັ້ນນຶ່ງຕິດຜົມມາ ມັນຍັງເອົາຄືນໄປສົ່ງ ເພາະຢ້ານບາບ ຖ້າກູເອົາໄມ້ເທົ້ານີ້ໃຫ້ມັນຖືໄປເພື່ອໄລ່ໝາ ຄົງບໍ່ເສັຽຫາຍ" ຄິດແລ້ວຈຶ່ງບອກວ່າ "ນີ້ນ່າເພື່ອນ ຖ້າທ່ານຢ້ານໝາ ຈົ່ງຖືເອົາໄມ້ເທົ້າຂອງຂ້າພະເຈົ້າໄປນຳກໍໄດ້" ຊີວະພຸຕຕິດີໃຈ ກ່າວຄຳຂອບຄຸນບັນບະພານແລ້ວ ຖືເອົາໄມ້ເທົ້າໜີເຂົ້າໄປໃນບ້ານ ແລ້ວເລີຍອອກໜີໄປທາງອື່ນ ບັນບະພານນອນຖ້າຢູ່ຈົນຮອດແຈ້ງ ກໍບໍ່ເຫັນກັບມາ ແຕ່ກໍຄິດຢູ່ວ່າ ມັນບໍ່ມາວັນນີ້ ວັນໜ້າມັນຄົງມາແນ່ນອນ ບັນບະພານນອນຄອຍນັ້ງຄອຍຢູ່ເຖິງສາມວັນ ກໍບໍ່ເຫັນຊີວະພຸຕຕິກັບມາ ຈຶ່ງອອກຕິດຕາມຫາເລື້ອຍໄປ ຈົນໄປເຖິງເມືອງນຶ່ງ ເປັນເວລາຄ່ຳມືດ ມີຄວາມເມື່ອຍລ້າຫລາຍ ຈຶ່ງໄປແວ່ນອນໃຕ້ຕົ້ນໄຮຕົ້ນນຶ່ງທີ່ຢູ່ແຄມຜັກຕູເມືອງ ທີ່ນັ້ນມີຊາຍຄົນນຶ່ງທຳເພດເປັນປະຣິພາຊົກ ບໍ່ນຸ່ງຜ້າມີຮວດໝາກຫຸບເທນແຂວນຄໍສອງສາມລູກນອນຢູ່ໃນສາເຫຼກທີ່ຫ້ອຍແຂວນໄວ້ກັບງ່າໄຮ ບັນບະພານເຫັນມີຄວາມປະຫຼາດໃຈຈຶ່ງຖາມອອກໄປວ່າ "ນັ້ນ! ທ່ານແມ່ນໃຜເຫດໃດຈຶ່ງມານອນຢູ່ຈັ້ງຊີ້" ຊາຍຄົນນັ້ນຕອບ "ຂ້າພະເຈົ້າເປັນນັກບວດຮັກສາສິນພາວະນາ ເມື່ອວ່າຈະລົງໄປນັ້ງຫລືຢືນຮັກສາສິນຢູ່ທີ່ແຜ່ນດິນ ກໍຢ້ານຈະຢຽບສັດເລັກສັດນ້ອຍຕາຍ ສະນັ້ນຈຶ່ງໄດ້

ຂຶ້ນນອນຢູ່ເທິງສາເຫຼົາ ດັ່ງທີ່ທ່ານເຫັນນີ້" ບັນຍະພານໄດ້ຟັງແລ້ວກໍ່ຄຶດຣ່ຳເພິງວ່າ "ເອີ! ໜໍ້ນກໍປະຫຼາດຫຼາຍ ມັນຄິງມີເຫດແນວໃດແນວນຶ່ງເປັນແນ່ແທ້ ກູຈະນອນຢູ່ທີ້ນຄອຍສັງເກດເບິ່ງກ່ອນ" ຄຶດແລ້ວກໍຫຼີກໄປນອນຢູ່ບໍ່ໄກຈາກຊາຍຄົນນັ້ນນັກ ພໍເດິກມາກະວ່າພານນອນຫຼັບແລ້ວ ຊາຍນັກເລງຄົນນັ້ນກໍລົງຈາກສາເຫຼົາເຂົ້າໄປໃນເມືອງ ທ່ຽວຫາລັກຂອງໄດ້ແລ້ວກໍກັບອອກມາທີ່ເກົ່າ ຈຶ່ງມາພໍ້ຊີວະພຸດຕິຜູ້ເປັນສະຫາຍນັກເລງດ້ວຍກັນ ທັງສອງຄົນປຶກສາກັນວ່າ "ນີ້ສ່ຽວ! ໃນເມືອງນີ້ເຂົາລືກັນໝົດແລ້ວວ່າເຮົາທັງສອງເປັນໂຈນ ດຽວນີ້ເຈົ້າໜ້າທີ່ກຳລັງຕິດຕາມຈັບໂຕເຮົາທັງສອງຢູ່ ເຮົາບໍ່ຄວນຢູ່ໃນທີ່ນີ້" ວ່າແລ້ວສອງສະຫາຍໂຈນກໍພາກັນລັກໜີໄປ ຝ່າຍບັນຍະພານນອນບໍ່ຫຼັບເພາະເສັຽງດາຍໄມ້ເທົ້າ ຈຶ່ງໄດ້ຍິນສຽງສອງສະຫາຍໂຈນປຶກສາກັນຈົນຕລອດ ແຕ່ກໍ່ຈື່ໜ້າບໍ່ໄດ້ ເພາະເປັນເວລາກາງຄືນ ຄັນຮຸ່ງເຊົ້າມາພານກໍອອກຈາກທີ່ນັ້ນ ທ່ຽວພະເນຈອນໄປຕາມຍະຖາກັມຈົນເວລາຄ່ຳ ຈຶ່ງໄປເຖິງເຮືອນນາຍຊ່າງຫູກ ກໍແວະເຂົ້າໄປນອນໃນໂຮງຕ່ຳຫູກຂອງເຂົາ

ສ່ວນເມັຽຊ່າງຫູກເປັນຄົນບໍ່ດີ ໄດ້ລັກຫຼີ້ນຊູ້ຈາກຜົວມາເຫິງແລ້ວຈົນຜົວຮູ້ ແຕ່ຍັງຈັບບໍ່ໄດ້ ວັນນຶ່ງຜົວກັບມາຈາກໄປເຮັດວຽກ ໄດ້ເຫັນເມັຽຂອງຕົນນັ່ງປຶກສາກັບເຣື່ອງຊູ້ຢູ່ກັບເມັຽຊ່າງຕັດຜົມຜູ້ເປັນແມ່ສື່ ຊ່າງຫູກມີຄວາມຄຽດແຄ້ນຫຼາຍ ຈຶ່ງຕີເມັຽຂອງຕົນແລະມັດຕິດໄວ້ກັບເສົາໂຮງຕ່ຳຫູກ ແລ້ວໂຕເອງກໍເຂົ້ານອນ

ພໍທ່ຽງຄືນເມັຽຊ່າງຕັດຜົມຜູ້ເປັນແມ່ສື່ກໍກັບມາຫາອີກ ບອກວ່າ "ດຽວນີ້ຊູ້ຂອງເຈົ້າມາຄອຍຖ້າຢູ່ແລ້ວ ເຂົາຄຶດຮອດເຈົ້າຫຼາຍຈົນໃຈຊິຂາດ ຂໍໃຫ້ຟ້າວໄປຫາ ເຮົາຊິໃຫ້ມັດໂຕເຮົາໄວ້ແທນຈົນກວ່າເຈົ້າຊິກັບມາ" ວ່າແລ້ວຍິງທັງສອງກໍຈັດການຕາມທີ່ໄດ້ເວົ້າກັນ ຊາວຊ່າງຫູກຕື່ນຂຶ້ນ ຮ້ອງດ່າເມັຽເໜີດແຮງວ່າ "ອີຕາຍດັບເປັນຫຍັງມຶງບໍ່ໄປຫາຊູ້ຫື?" ເມັຽຊ່າງຕັດຜົມບໍ່ປາກ ຊ່າງຫູກໂມໂຫຂຶ້ນມາຈຶ່ງເວົ້າ "ນຶງບໍ! ມັນຈອງຫອງຫຼາຍລັກບອກໃຈກູໄດ້" ວ່າແລ້ວຊ່າງຫູກເຂົ້າໃຈວ່າແມ່ນເມັຽໂຕ ຄວາໄດ້ມີດກໍອອກໄປປາດດັງເມັຽຊ່າງຕັດຜົມຂາດ ແລ້ວກໍກັບເຂົ້າໄປນອນອີກ ຕໍ່ມາເມັຽຊ່າງຫູກເມື່ອໄດ້ສະນາຄົມເສບສົມກັບຊູ້ແລ້ວກໍກັບມາ ສົນຖາມເມັຽຊ່າງຕັດຜົມວ່າ "ເປັນຈັ່ງໃດສ່ຽວມີເຣືອງ ່ຽງບໍ່?"

ເມັຽຊ່າງຕັດຜົມວ່າ "ໂຕເບິ່ງໜ້າເຮົາດູ!" ແລ້ວເມັຽຊ່າງຫູກກໍຟ້າວແກ້ບາງແມ່ສື່ນັ້ນອອກ ແລະໃຫ້ມັດໂຕໄວ້ຕາມເດີມ ເມື່ອໄດ້ນັດໝາຍເຣືອງກົນອຸບາຍໄວ້ຮຽບຮ້ອຍແລ້ວ ເມັຽຊ່າງຕັດຜົມບາຍໄດ້ດັ່ງທີ່ຂາດອອກ ກໍຟ້າວກັບເມືອເຮືອນນອນເອົາຜ້າປົກໜ້າໄວ້

ຕື່ນເຊົ້າມາ ຊ່າງຕັດຜົມບອກໃຫ້ເມັຽເອົາກັບມີດແຖມາໃຫ້ເພື່ອອອກໄປຫາຕັດຜົມຕາມເຄີຍ ສ່ວນເມັຽບໍ່ເອົາໃຫ້ໝົດທັງກັບຕັ້ງແກ້ງຫິ້ງບເອົາແຕ່ມີດແຖດວງດຽວໂຍນມາໃຫ້ ຊ່າງຕັດຜົມຄຽດຈຶ່ງຈັບມີດແຖດວງນັ້ນບວ້ມາທາງເມັຽ ຝ່າຍເມັຽພິຕີເອົາຟ່າມືຂຶ້ນບັງ

ໜ້າທັນທີ ແລະທຳກິຣິຍາເປັນເຈັບຮ້ອງຂຶ້ນວ່າ "ຮ້ວາຍ! ເປັນຫັຽງຈັ້ງເອົາມີດມາປາດຄໍຂ້ອຍ ຂ້ອຍບໍ່ໄດ້ເຮັດແນວໃດຜິດຈັກດ໌" ວ່າແລ້ວນາງກໍຟ້າວໄປຟ້ອງຕໍ່ທ່ານທັມມາທິກາຣີ (ຫົວໜ້າສານ)

ກ່າວເຖິງເມັຽຊ່າງທູກ ເມື່ອນາງເມັຽຂອງຊ່າງຕັດຜົມໜີໄປແລ້ວ ມັນກໍທຳກົນຮ້ອງໄຫ້ແລະໄຫວ້ວອນເທພດາອະທິຖານວ່າ "ສາທຸ! ຂໍໃຫ້ເທພເຈົ້າປະຈຳໂລກທັງ ໘* ຈົ່ງລ່ຳແລເບິ່ງເບງຜູ້ຂ້າ ຜູ້ຂ້ານີ້ເປັນຍິງບໍຣິສຸດມີໃຈທ່ຽງໝັ້ນຕໍ່ຜົວແທ້ ບໍ່ເຄີຍຮູ້ຈັກຊາຍອື່ນ ແມ່ນແຕ່ຈະຄຶດຝັນວ່າ ໄດ້ສະມາຄົມກັບຊາຍອື່ນກໍບໍ່ເຄີຍມີ ດັ່ງນັ້ນ ຂໍເທພເຈົ້າຈົ່ງຊ່ອຍບັນດານໃຫ້ດັງຂອງຜູ້ຂ້າຄືນຄືເກົ່າ ຢ່າໃຫ້ມີບາດແຜເລີຍ" ຜົວໄດ້ຍິນຄຳເມັຽອະທິດຖານດັ່ງນັ້ນ ຈຶ່ງລຸກຂຶ້ນໄຕ້ໄຟມາເບິ່ງ ເຫັນດັງເມັຽຍັງດີຢູ່ຄືເກົ່າ ກໍລົງນັ່ງຄູ້ເຂົ່າຊວງກອດເມັຽດ້ວຍຄວາມຮັກແລ້ວຂໍສົມມາໂທດ

ສ່ວນຍັນທະພານຜູ້ເສັຽໄມ້ເທົ້າ ນອນຢູ່ໃນໂຮງຕ່ຳທູກ ໄດ້ຮູ້ເຫັນເຫດການທີ່ເປັນມາໃນຄືນນັ້ນຕລອດທຸກປະການ ພໍຮຸ່ງເຊົ້າມາ

---

*ເທພເຈົ້າປະຈຳໂລກທັງ ໘ ແມ່ນເທວະດາຜູ້ຮັກສາທິດທັງ ໘ ນັ້ນເອງ ຄື

໑. ພຣະອິນຫລືທ້າວທະຕະຣັດຖະ ທິດບົວຣະພາ
໒. ພຣະອັຄນີ ທິດອາຄະເນ
໓. ພຣະຍາມົມ ທິດທັກສິນ
໔. ພຣະສຸຣິຍະ ທິດເນຣະດີ ຫລືຫໍຣະດີ
໕. ພຣະວະຣຸນ ທິດປັດສິມ
໖. ພຣະພາຍຸ ທິດພາຍັບ
໗. ທ້າວກຸເວນ ທິດອຸດອນ
໘. ອີຣະໄສນ ທິດອີສານ

ທ່ານທັມມາທິກາຣີ ກໍໃຫ້ເຈົ້າໜ້າທີ່ມາຈັບເອົາຊາຍຊ່າງຕັດຜົມ (ທີ່ເອົາມີດແຖປາດດັງຜມັງ) ໄປລົງໂທດປະຫານຊີວິດ ບັນບະພານ ໄດ້ເຫັນດັ່ງນັ້ນຈຶ່ງໄປດຶງປີກເສື້ອເຈົ້າພະບັກງານໄວ້ ຫ້າມວ່າ "ທ່ານ ບໍ່ຄວນເອົາຊາຍຄົນນີ້ໄປຂ້າ"

ເຈົ້າພະບັກງານຖາມວ່າ "ເພາະເຫດໃດຈຶ່ງບໍ່ຄວນ" ບັນ-ບະພານຕອບວ່າ "ຂໍທ່ານຈົ່ງຟັງກ່ອນ" ແລ້ວລາວຈຶ່ງກ່າວໂສກ ຄາຖານີ້ຂຶ້ນວ່າ

(໑໙) "ໝາຈອກ ເຖິງຄວາມພິນາດ ຍ້ອນແພະຊົນກັນ, ສ່ວນ ຂ້າພະເຈົ້າເຖິງຄວາມຈິບຫາຍ (ເສັ່ງໄມ້ເທົ້າ) ກໍຍ້ອນຄົບກັບຊາຍ ນັກເລງ ຊີຊີວະພຸຕຕິ ແລະນາງຜມັງຊ່າງຕັດຜົມ ໄດ້ເຖິງຄວາມ ວາບວອດ (ເພາະດັງຂາດ) ກໍຍ້ອນເປັນແມ່ສື່ ພວກທັງສາມນີ້ ໄດ້ເຖິງຄວາມຈິບຫາຍ ກໍຍ້ອນການກະທຳຂອງຕົນເອງ"

ບັນບະພານກ່າວໂສກຄາຖານີ້ແລ້ວ ຈຶ່ງເລົ່າປະພຶດເຫດທັງ ໝົດທີ່ຕົນໄດ້ເຫັນມາຕັ້ງແຕ່ຕົ້ນ ໃຫ້ເຈົ້າພະບັກງານຟັງ ເຈົ້າ-ພະບັກງານນຳຄະດີເຣື່ອງນີ້ ຂຶ້ນສເນີຕໍ່ທ່ານທັມມາທິກາຣີໃຫ້ຕັດສິນ ທ່ານທັມມາທິກາຣີພິຈາຣະນາແລ້ວ ກໍຕັດສິນໃສ່ໂທດພວກທີ່ ກະທຳຜິດນັ້ນ ຄືໃຫ້ແຖຫົວຜມັງຊ່າງຕັດຜົມປະຈານ ນຳຈັບເອົາ ຊາຍໂຈນທັງສອງຄົນນັ້ນມາປັບໃໝ ແລະບັນບະພານນັ້ນກໍໄດ້ໄມ້ ເທົ້າຂອງຕົນຄືນ

ກົບຊີ່ພະບຸສູດ ເລົ່ານິຍາຍນີ້ໃຫ້ພຣະຍາມັນທຸກະຣາດແລະ ບາດພົນ້ອງຟັງແລ້ວ ບັງກ່າວແຖມອີກວ່າ ຖ້າເຮົາອະນຸບາດໃຫ້ໆ

ໂຕນີ້ລົງມາຢູ່ນຳເຮົາແລ້ວ ຫາກມີຄວາມເສັຽຫາຍເກີດຂຶ້ນ ກໍ່ແມ່ນຄວາມຜິດຂອງເຮົາເອງ ດັ່ງນີ້ບາຍຂອງພວກເຂົາທັງສາມທີ່ກ່າວມານີ້"

ເມື່ອນັ້ນພຣະຍາກົບກ່າວຕອບພວກກົບທັງຫລາຍວ່າ "ດູລາເພື່ອນທັງຫລາຍ ງູໂຕນີ້ອາການອັນເມື່ອຍລ້າ ມາຂໍເພິ່ງພາອາສັຍເຮົາ ເຮົາກໍ່ຄວນອີ່ດູກູນາມັນ ສ່ວນເຣື່ອງອື່ນນອກນັ້ນ ກໍ່ເອົາແຕ່ບຸນກັມເປັນຫັ້ນຖ້ອນ ເພາະເພິ່ນວ່າ

(໑໔) "ທຸກຄົນໃນໂລກ ຕ້ອງໄດ້ຮັບຜົນກັມທີ່ຕົນທຳໄວ້ທັງດີແລະຊົ່ວໂດຍປະການທັງປວງ (ຈະຫຼີກເວັ້ນບໍ່ໄດ້) ຫາກບັງບໍ່ໄດ້ຮັບ (ໃນຊາດນີ້) ແມ່ນນານໄປຕັ້ງຮ້ອຍໂກດກັບ ຜົນຂອງກັມນັ້ນກໍ່ບັງບໍ່ສັ່ງງ (ຄືບັງຈະໄດ້ຮັບຢູ່ນັ້ນເອງ)"

ພຣະຍາກົບກ່າວດັ່ງນີ້ແລ້ວ ກໍ່ໃຊ້ປ່ອງອະນຸຍາດໃຫ້ງູໂຕນັ້ນລົງມາໃນບວກຂອງຕົນ ເມື່ອງູໄດ້ລົງມາໃນບວກນ້ຳແລ້ວກໍ່ເອົາພຣະຍາກົບຂຶ້ນຂີ່ຫົວພາລອຍຫຼິ້ນໄປມາຢ່າງສະບາຍ ຈົນພຣະຍາກົບຕາຍໃຈ ພາຍລຸນມາງູກໍ່ລັກກິນກົບພວກນັ້ນວັນລະໂຕສອງໂຕຈົນກົບໃນບວກນັ້ນໝົດ ແລ້ວມັນກໍ່ໄດ້ຄາບເອົາພຣະຍາກົບ ພຣະຍາກົບຖືກງູຄາບໄວ້ແລ້ວ ຈຶ່ງມາຮ່ຳເພິງໃນໃຈວ່າ

(໑໕) "ເທພດາ ໄອສວນແລະມະນຸດທັງຫລາຍ ບັງຕົກຢູ່ໃຕ້ອຳນາດແຫ່ງຄວາມເຊື່ອມສລາຍເປັນທັມມະດາ ເມື່ອຄວາມຕາຍເປັນຂອງທ່ຽງແທ້ດັ່ງນີ້ ເຮົາຜູ້ເປັນສັດເລັກນ້ອຍກໍ່ຈະເຮັດຫັງງໄດ້"

ເມື່ອພຣະຍາກົບພວມຮໍາເພິງຢູ່ດັ່ງນີ້ ງູກໍເລີຍກົບກົບຈ້ອຍດັ່ງນັ້ນ ເພິ່ນຈຶ່ງວ່າ

(໑໙) "ການທໍາອຸປກາຣະຄຸນແກ່ຄົນຜູ້ຖ່ອຍ ມີແຕ່ສ້າງສິ່ງທີ່ບໍ່ເປັນຄຸນໃຫ້ງອກງາມ ດັ່ງດຽວກັບກັບການດູດກົບນ້ຳນົມແຫ່ງພຣະຍານາກ ກໍມີແຕ່ເຮັດໃຫ້ພິດຈະເກີນທາງດຽວທໍ່ນັ້ນ"

ເຫດນັ້ນເທວະດາຕົນຮັກສາໂລກ ຈຶ່ງກ່າວໂສກອັນນີ້ໄວ້ໃຫ້ຄົນຈື່ຈໍາວ່າ

ສັດຕູປ່າອວດອ້າງ ເປັນມິດ
ງ້ວນເບື້ອຂອງມີພິດ ບ່ໍງນັ້ນ
ໃຜເສບສ້ຽງຊີວິດ ດັບມອດ ວາຍນາ!
ດູຈດັ່ງກົບຜູກຝັ້ນ ແຝງດ້ວຍດອມງູນັ້ນແລ

ເມື່ອນັ້ນ ນາງຕັ້ນໄຕມະຫາເທວີ ຈຶ່ງມີຄໍາຈາດອມນ້ອງສາວຂອງຕົນວ່າ "ດູລານາງ ອັນວ່າເຈົ້າໄທເຮົາທັງຫຼາຍໝາຍມີ ທ້າວພຣະຍາເສນາມຸນຕີ ຄະຫະບໍດີປະໂຣຫິດ ຣາຊບັນດິດທັງຫລາຍ ໃນໂລກນີ້ ຈັກກະທໍາການອັນໃດກໍດີ ຄວນພິຈາຣະນາຕາຕອງ ເບິ່ງຮີດຄອງອັນຊອບແລະປະກອບດ້ວຍຄຸນກ່ອນແລ້ວຈຶ່ງຄວນທໍາ ການເບື້ອງໃດເມື່ອຍັງບໍ່ໄດ້ພິຈາຣະນາຕາຕອງໃຫ້ແຈ້ງແລ້ວ ແລະກະທໍາການອັນນັ້ນຍ່ອມພາໃຫ້ເກີດຄວາມເດືອດຮ້ອນກົນແໜງໃຈ ເມື່ອພາຍລຸນປຸນຜິດ ລວດພາໃຫ້ເສັງຊີວິດຕາຍໄປເປັນດັ່ງໃນຍະອັນພຣະຍາກົບໄດ້ກະທໍາມານັ້ນແລ".

ບໍຣະບວນ.

# ສໂລກຄາຖາປະກອບນິທານ
# ໃນເຣື່ອງມັນທຸກະປະກອບ

---

## ຄາຖາຕົ້ນເຣື່ອງ

(໑) ນິຕິວັກຂັງ ມາທາສາຕຣັງ ໂສຕຸມາລັສສະມາວະເທາ
ຕິຣັຈສານະຈະຣິເຕ ຕັສມາ ຕະໂຕ ອະນະຕະນິເວຣິຕັງ

## ເຣື້ອງພຣະບາລິງ

(໒) ທາສິເມສສະ ວິໂຣເທນະ ເຍ ນະຣາ ນິທທະນັງ ຄະຕາ
ຕັສມາ ກະລະຫະຕັນເຕສັງ ທູຣະໂຕ ປະຣິວັຊຊະເຍ

## ເຣື້ອງວິທຍາທອນ

(໓) ທັກຂະນັງ ກຸຣຸເຕ ນິຈຈັງ ທັກຂະນັນຈະ ປະມານັຕຖິ
ອະຕິທັກຂະນະ ໂທເສນະ ອິກໂຂ ຄັພພະທະໂຣ ມະໂຕ

## ເຣື້ອງງູເຫົ່າກັບໜູ

(໔) ອະຕິຕະກາເລ ຕະວັງ ສັຕຕູ ມູສິກາ ມິຕຕະພັນທະວາ
ອຸເພນນະ ກາຣນະສິທທັງສຸ ປຸນະ ສັຕຕູ ພະວິສສະຕິ

## ເຣື້ອງໝາຈອກ

(໕) ອະຕິໂລພັງ ນະກາຕັພພັງ ໂລພັງ ກະຕັງ ປະມານະຕັງ
ອະຕິໂລພັສສະ ໂທເສນະ ຊັມພຸໂກ ທະນຸນາຫະຕັງ

## ເຣື່ອງເສດຖີ

(໖) ອະປັຈຈັກຂັງ ວາກະບັງ ອະປິ ປັຈຈັກຂາບະ ພະເວ ບະຖາ
ວາບະອັສສະ ຄີຕັງ ບະຖາ ຕະອະຕິ ອຸທະເກ ສີລາ

(໗) ເສຕເຖ ປະຕິສັຕຖັງ ກຸພພາ ປັນທິເຕ ບີຕີນະຈະເຣ
ວັທບະເສຕຖີ ມະຫາໄລພີ ບະຖາ ຈະ ວະສະບະເສຕຖີ

## ເຣື່ອງລີງກັບຫລົ້ມ

(໘) ອະກັຕຕະວະເບສຸ ພບາປາຣັງ ເບ ບະອາ ກາຕຸມິຈສະຕິ
ສະເອວະ ບິທທະບັງ ບາຕິ ເພໄລສາເທບະ ຕັກກະອາ

## ເຣື່ອງພຣະບາວິສວາວະສຸຣາດ

(໙) ຕະວັງ ກັປປະບະເຕ ອຸກຂະ ວາບະເອບະ ບະເອບະ ວາ
ອະປິ ເມ ໂຫສະໂຕວາປີ ມາ ໂຫສັງ ກະຖະບິສສະສິ

(໑໐) ສຸພະອັງຄີ ອັນຊຸບະຈັກຂຸ ທັງສາບະມິວະ ຄາມິບີ
ອັຕຕະຫີ ບະທຸສສະເສວະ ມະນະຈິຕເຕ ປັຕຕິຕະວັງ

## ເຣື່ອງບັນບະພຣາມ

(໑໑) ອັຕບາຈາຣັງ ອະບາຈາຣັງ ອະຕິບິທທະມະຕິ ຖູຕີງ
ອະຕິໂສຈິ ອະຕິໂສຈັງ ສະຖຸບາ ທຸຕຖະລັກຂບາ

(໑໒) ເມບທະກັສສະ ວິໂອເທບະ ຊຸັມພຸໂກ ບິທທະບັງ ຄະໂຕ
ຕັສມາ ຈັກຂຸ ຕັບເທສັງ ທູອະໂຕ ປະອິວັຊຊະເບ

(໑໓) ຊັນຍຸໂກ ເນສສະບຸທເທນະ ອະຫັນຈະ ຊີວະນຸຕຕິນາ
ບະຫັຕຕິ ຫູຕະໂທເສນະ ຕະໂບ ບັຕຖັງ ສະບັງ ຄະຕາ

(໑໔) ສັພພະຖາ ອະນຸໂພຕິ ກັນນັງ ສຸພາສຸພັງ ບະຂິບະເຕ
ອະນຸໂພຕັງ ປະກະຕັງ ກັນນັງ ກັປປະໂກຕິ ສະເຕນະປິ

(໑໕) ເທວາສູຣະມະນຸສສາຈະ ຂບະວບະ ວະສານຸກາ
ຊຸຫທະກັງ ນາທິສັງອັຕຕາ ກິນປະນະ ນະຣະນັງ ຫຸວັງ

(໑໖) ອຸປປະກາໂອປິ ນິຈານັງ ອັປປະກາຣາບະ ວັທທະເຕ
ປະໂບນັງວະ ພຸຊັງຄັສສະ ເກວະລັງ ວິສະວັທທະຕັງ

ພິມທີ່ໂຮງພິມລ່ຽງຊຽງຈິງຈະເຣີນ ໒໕ປີ ຖນົນບຳຣຸງເມືອງ
ສຳຣານຣາດ ບາງກອກ
ນາຍຕຽວຈຸ໊ຍ ແຊ່ຕຽວ ຜູ້ພິມແລະຜູ້ໂຄສະນາ ໒໕໐໗